ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ນະຄອນຫຼວງວຽງຈັນ, ວັນທີ 30 MAR 2022

ໜັງສືແຈ້ງເຊີນ

ຮຽນ: **ທ່ານຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ທີ່ນັບຖື.**

ເລື່ອງ: **ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021**

- ອີງຕາມການຕົກລົງຂອງກອງປະຊຸມສະພາບໍລິຫານ ຄັ້ງວັນທີ 21 ມີນາ 2022;

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດຮຽນເຊີນທ່ານ ຜູ້ຖືຮຸ້ນ ທຄຕລ ເຂົ້າຮ່ວມ **ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ໃນວັນທີ 29/04/2022 ເວລາ 14:00 ໂມງ (ລົງທະບຽນເວລາ 13:00 – 14:00 ໂມງ) ທີ່ ຫ້ອງປະຊຸມ Grand Ballroom, ໂຮງແຮມລາວພຣາຊາ (ຊັ້ນ 1),** ນະຄອນຫຼວງວຽງຈັນ ເພື່ອພິຈາລະນາແລະຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ທຄຕລ ໄດ້ກຳນົດເອົາວັນທີ **01/04/2022 ເປັນມື້ປິດບັນຊີທະບຽນຜູ້ຖືຮຸ້ນ** ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ເຊິ່ງໄດ້ເປີດເຜີຍຂໍ້ມູນຮຽບຮ້ອຍແລ້ວ.

ເພື່ອປ້ອງກັນການແຜ່ລະບາດຂອງ ພະຍາດໂຄວິດ-19, **ທຄຕລ ສົ່ງເສີມໃຫ້ຜູ້ຖືຮຸ້ນມອບສິດໃຫ້ສະມາຊິກສະພາບໍລິຫານອິດສະລະທ່ານໃດໜຶ່ງເປັນຜູ້ຕາງເຂົ້າຮ່ວມປະຊຸມແທນ** ໂດຍປະກອບແບບຟອມໃບມອບສິດທີ່ຄັດຕິດມາພ້ອມນີ້ ແລ້ວສົ່ງໃຫ້ ທຄຕລ ທາງອີເມວ: bcelhqv@bcel.com.la ຫຼື ນຳສົ່ງເປັນເອກະສານມາທີ່ ສຳນັກງານໃຫຍ່ ທຄຕລ ຕັ້ງຢູ່ເລກທີ 01 ຖະໜົນປາງຄຳ ບ້ານ ຊຽງຍືນ ເມືອງ ຈັນທະບຸລີ ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 2925 ກ່ອນວັນທີ 27 ເມສາ 2021.

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ປະທານສະພາບໍລິຫານ
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ບຸນເຫຼືອ ສິນໄຊວໍຣະວົງ

Head Office: No.1 Pangkham Street Vientiane, Lao PDR. P.O.Box 2925 Tel: (856-21) 213200-1, 222495, 217904, 217898-9
Fax: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhgv@bcel.com.la, SWIFT Code: COEBLALA

ເອກະສານຄັດຕິດ

1. ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 (ເອກະສານຄັດຕິດ 1)
2. ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນປະຈຳປີ 2021 (ເອກະສານຄັດຕິດ 2)
3. ບົດລາຍງານການດຳເນີນທຸລະກິດຂອງ ທຄຕລ ປະຈຳປີ 2021 ໂດຍສັງເຂບ (ເອກະສານຄັດຕິດ 3)
4. ແຜນການປີ 2022 (ເອກະສານຄັດຕິດ 4)
5. ການສະເໜີສ້າງຕັ້ງບໍລິສັດ ທຄຕລ ບໍລິການຊັບສິນ (ເອກະສານຄັດຕິດ 5)
6. ແບບຟອມໃບມອບສິດ (ເອກະສານຄັດຕິດ 6)
7. ລະບຽບສຳລັບການດຳເນີນ ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ (ເອກະສານຄັດຕິດ 7)
8. ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ (ເອກະສານຄັດຕິດ 8)
9. ຄຳແນະນຳກ່ຽວກັບການລົງຄະແນນສຽງ (ເອກະສານຄັດຕິດ 9)
10. ແຜນທີ່ສະຖານທີ່ປະຊຸມ (ເອກະສານຄັດຕິດ 10)

❖ **ໝາຍເຫດ:**

1. ຜູ້ຖືຮຸ້ນແຕ່ລະທ່ານສາມາດດາວໂຫຼດເອົາໜັງສືແຈ້ງເຊີນ ພ້ອມເອກະສານຄັດຕິດໄດ້ທີ່ເວັບໄຊຂອງ ທຄຕລ www.bcel.com.la ແລະ ເວັບໄຊຂອງຕະຫຼາດຫຼັກຊັບລາວ www.lsx.com.la ຫຼື ຈະໄປຮັບເອົາໜັງສືເຊີນປະຊຸມທີ່ລະບຸສິດຂອງທ່ານໃນການເຂົ້າຮ່ວມກອງປະຊຸມ (ມີລະຫັດບາໂຄດ) ຢູ່ຕະຫຼາດຫຼັກຊັບລາວ ທີ່ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ໂທລະສັບ +85621 454361-4 ເລີ່ມແຕ່ວັນທີ 19 ເມສາ 2022.
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງ ແລະ ຜູ້ຕາງໜ້າກະລຸນານຳບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ລາຍລະອຽດເອກະສານຕ່າງໆ ທີ່ຕ້ອງນຳມາສະແດງໃນເວລາເຂົ້າຮ່ວມກອງປະຊຸມ ໄດ້ລະບຸໄວ້ໃນ ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕ ເພື່ອເຂົ້າຮ່ວມກອງປະຊຸມ ທີ່ຄັດຕິດມາພ້ອມນີ້.
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າມາຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ພ້ອມລົງລາຍເຊັນໃນໃບມອບສິດຕາມເອກະສານທີ່ໄດ້ຂັດຕິດມາພ້ອມນີ້ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

❖ **ຜູ້ປະສານງານຝ່າຍ ທຄຕລ**

1) ທ່ານນາງ ພອນດາສຸກ ວົງພະຈັນ, ໂທ: 020 92 63 64 56
2) ທ່ານ ພອນນະລັດ ກອງວົງສາ, ໂທ: 020 2222 3455

ວາລະກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝສາມັນ
29 ເມສາ 2022

ວາລະທີ 1: ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນປະຈຳປີ 2021

ບົດບັນທຶກກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນຂອງ ທຄຕລ ປະຈຳປີ 2021 ຈັດຂຶ້ນໃນວັນທີ 29 ຕຸລາ 2021 ຕາມລາຍລະອຽດທີ່ຢູ່ໃນ **ເອກະສານຄັດຕິດ 2** ເຊິ່ງບົດບັນທຶກດັ່ງກ່າວ ໄດ້ຖືກເປີດເຜີຍຢ່າງສອດຄ່ອງກັບກົດລະບຽບທີ່ກ່ຽວຂ້ອງແລ້ວ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ເຫັນວ່າ ບົດບັນທຶກກອງປະຊຸມດັ່ງກ່າວ ມີເນື້ອໃນຖືກຕ້ອງ ແລະ ຄົບຖ້ວນແລ້ວ ຈຶ່ງເຫັນຄວນສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ຈະຖືວ່າຖືກຮັບຮອງເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການດຳເນີນທຸລະກິດຂອງ ທຄຕລ ປະຈຳປີ 2021 (ເອກະສານຄັດຕິດ 3)

❖ **ການເຄື່ອນໄຫວຂອງ ທຄຕລ ທີ່ພົ້ນເດັ່ນໃນໄລຍະປີ 2021 ຜ່ານມາໂດຍຫຍໍ້**

- ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທຄຕລ 5 ຄັ້ງ; ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ ຈຳນວນ 4 ຄັ້ງ, ສະໄໝວິສາມັນ ຈຳນວນ 7 ຄັ້ງ ແລະ ຈັດກອງປະຊຸມຜູ້ຖືຮຸ້ນ ທຄຕລ ຈຳນວນ 2 ຄັ້ງ (ສາມັນ 1 ຄັ້ງ, ວິສາມັນ 1 ຄັ້ງ);
- ຈ່າຍເງິນປັນຜົນໃຫ້ແກ່ຂາຮຸ້ນຂອງ ທຄຕລ ປະຈຳປີ 2020 ທັງໝົດ ຈຳນວນ 560ກີບ/ຮຸ້ນ;
- ໄດ້ມີການປ່ຽນແປງໃນລະດັບຄະນະອຳນວຍການ ຕາມການຕົກລົງຂອງສະພາບໍລິຫານ ດັ່ງນີ້:
  1) ຍົກຍ້າຍຮອງຜູ້ອຳນວຍການ 1 ທ່ານ ເພື່ອໄປຮັບໜ້າທີ່ໃໝ່ຢູ່ທະນາຄານທຸລະກິດລັດແຫ່ງອື່ນ;
  2) ອະນຸມັດການລາອອກສ້າງເສດຖະກິດຄອບຄົວຂອງຮອງຜູ້ອຳນວຍການ 1 ທ່ານ;
  3) ແຕ່ງຕັ້ງຮອງຜູ້ອຳນວຍການ 4 ທ່ານ;
  4) ຮັບຮອງການຍົກຍ້າຍທ່ານ ພູຂົງ ຈັນທະຈັກ ຜູ້ອຳນວຍການ ທຄຕລ (ຜູ້ເກົ່າ) ເພື່ອໄປຮັບໜ້າທີ່ໃໝ່ຢູ່ທະນາຄານແຫ່ງ ສປປ ລາວ ແລະ ແຕ່ງຕັ້ງທ່ານ ຄຳພຸດ ສິດທິລາດ ເປັນຜູ້ອຳນວຍການ ທຄຕລ (ຜູ້ໃໝ່);
- ໄດ້ຂະຫຍາຍການຊຳລະແບບທັນສະໄໝໄປສູ່ບໍລິສັດຊັ້ນນຳຈຳນວນໜຶ່ງຄື: ຮ່ວມມືກັບບໍລິສັດເອັມພອຍມາກ ການຄ້າ ຈຳກັດ ໃນການຊຳລະສະສາງສິນຄ້າ, ບໍລິການຜ່ານ QR Code; ພັດທະນາລະບົບເຊື່ອມຕໍ່ ແລະ ໂອນເງິນຮ່ວມກັບບໍລິສັດ Umoney & Mmoney; ຮ່ວມມືກັບກົມຊັບສິນທາງປັນຍາ, ກະຊວງອຸດສະຫະກຳ ແລະ ການຄ້າ ໃນການໃຫ້ບໍລິການຊຳລະຄ່າທຳນຽມ ແລະ ຄ່າບໍລິການ ຜ່ານລະບົບຂອງທະນາຄານ;
- ເປີດໂຕຜະລິດຕະພັນບັດ ATM UnionPay ເປັນບັດຊິບ (Chip)
- ເລີ່ມນຳໃຊ້ລະບົບ Core-Banking ໃໝ່ຂອງ ທຄຕລ ທົ່ວລະບົບ ໃນເດືອນເມສາ 2021
- ຮັບຮອງລະບຽບ ແລະ ບັນດາ DATA Dictionary ຂອງໂຄງການ DATA Governance ຂອງ ທຄຕລ.
- ສຳເລັດການຮັບຮອງບົດກວດສອບຖານະການເງິນ ທຄຕລ ປະຈຳ 06 ເດືອນຕົ້ນປີ 2021 ທຄຕລ ຈາກ ບໍລິສັດກວດສອບພາຍນອກ;

- **ຜົນການດຳເນີນທຸລະກິດ ປະຈຳປີ 2021**

ຜົນການດຳເນີນທຸລະກິດປະຈຳປີ 2021 ທີ່ໄດ້ຮັບການກວດສອບຈາກ ບໍລິສັດ PWC ແລະ ຮັບຮອງຈາກ ສະພາບໍລິຫານ ທຄຕລ ມີດັ່ງນີ້:

- ຍອດຊັບສິນ/ໜີ້ສິນ: 68.236.991 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 109,53%;
- ຍອດເງິນກູ້ທັງໝົດ: 30.080.974 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 122,15%;
- ຍອດເງິນຝາກ: 61.802.739 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 110,36%;
- ກຳໄລກ່ອນອາກອນ: 12.585 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 48,40%;
- ກຳໄລຫຼັງອາກອນ: 11.410 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 54,86%.

- ອີງໃສ່ຜົນການດຳເນີນທຸລະກິດຂອງ ທຄຕລ ປະຈຳປີ 2021 ທີ່ພົບກັບຄວາມຫຍຸ້ງຍາກຫຼາຍດ້ານ ເຮັດໃຫ້ບໍ່ສາມາດປະຕິບັດໄດ້ຕາມແຜນການ ສະນັ້ນ, ໃນປີ 2021 ສະພາບໍລິຫານ ຈຶ່ງໄດ້ຕົກລົງບໍ່ຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ ແລະ ສະເໜີຂໍແບ່ງກຳໄລຫຼັງຫັກອາກອນ ເຂົ້າຄັງຕ່າງໆຕາມລະບຽບການ ດັ່ງລຸ່ມນີ້:
  - ຄັງສະສົມຕາມລະບຽບການ: 10%
  - ຄັງຂະຫຍາຍທຸລະກິດ: 90%

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ ຈະຖືວ່າຖືກຮັບຮອງເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3: ພິຈາລະນາ ແລະ ຮັບຮອງເອົາແຜນການປະຈຳປີ 2022 (ເອກະສານຄັດຕິດ 4)

ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງແຜນການ ປະຈຳປີ 2022 ດັ່ງນີ້:

1). ແຜນທຸລະກິດ

- ຍອດຊັບສິນ : 72.543.000 ລ້ານກີບ, ທຽບໃສ່ການປະຕິບັດປີ 2021 ເພີ້ມຂຶ້ນ 6,31%;
- ຍອດເງິນຝາກ: 66.000.000 ລ້ານກີບ, ທຽບໃສ່ການປະຕິບັດປີ 2021 ເພີ້ມຂຶ້ນ 6,79%;
- ຍອດເງິນກູ້ທັງໝົດ: 31.737.000 ລ້ານກີບ, ທຽບໃສ່ການປະຕິບັດປີ 2021 ເພີ້ມຂຶ້ນ 5,51%;
- ໜີ້ NPL ທັງໝົດ : 1.847.000 ລ້ານກີບ ທຽບໃສ່ປະຕິບັດ 2021 ເພີ້ມຂຶ້ນ 59,05% ແລະ ກວມ 5,82% ຂອງສິນເຊື່ອທັງໝົດ;
- ກຳໄລກ່ອນອາກອນ: 59.000 ລ້ານກີບ ທຽບໃສ່ປະຕິບັດ 2021 ເພີ່ມຂຶ້ນ 368,81%.

2). ແຜນປະກອບອັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ

ການກຳນົດແຜນປະກອບອັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ທີ່ຄາດຄະເນຈະຈັດເຂົ້າຊັບສິມບັດ ພາຍໃນ ປີ 2022 ທັງໝົດ ຈຳນວນ 231,96 ຕື້ກີບ ເຊິ່ງຢູ່ໃນຂອບເຂດຂອງແຫຼ່ງທຶນທີ່ມີ. ໃນນັ້ນ, ຫຼັກໆ 2022 ແມ່ນເນັ້ນ ໜັກໃສ່ສະເພາະວຽກງານທີ່ມີຄວາມຈຳເປັນ ເພື່ອເສີມສ້າງຄວາມໝັ້ນຄົງທາງດ້ານລະບົບໃຫ້ແກ່ ທຄຕລ.

ກໍລະນີສະພາບເສດຖະກິດມີການປ່ຽນແປງ ຫຼື ມີຄວາມຈຳເປັນໃດໆທີ່ຕ້ອງດັດແກ້ແຜນການປະຈຳປີ 2022, ສະເໜີໃຫ້ກອງປະຊຸມມອບອຳນາດໃຫ້ສະພາບໍລິຫານ ທຄຕລ ພິຈາລະນາຮັບຮອງເອົາການດັດແກ້ແຜນການດັ່ງກ່າວ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ ຈະຖືວ່າຖືກຮັບຮອງເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງ ປະຊຸມ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງການສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນ (ເອກະສານຄັດ ຕິດ 5)

ເພື່ອເປັນໂອກາດໜຶ່ງໃນການສ້າງລາຍຮັບໃຫ້ ທຄຕລ, ເຊິ່ງຖືໄດ້ວ່າ ບໍລິສັດ ທຄຕລ ບໍລິຫານຊັບສິນ ຈະເປັນ ບໍລິສັດທຳອິດໃນ ສປປ ລາວ, ເປົ້າໝາຍໃນການດຳເນີນທຸລະກິດແມ່ນເພື່ອບໍລິຫານຈັດການ ໜີ້/ຊັບສິນ ທີ່ຊື້ຫລຸດ ຈາກ ທະນາຄານ/ສະຖາບັນການເງິນ ເພື່ອນຳມາປັບປຸງ-ພັດທະນາໃຫ້ສາມາດສ້າງລາຍຮັບ ຫລື ກາຍເປັນຊັບສິນທີ່ໄດ້ ມາດຕະຖານ ແລະ ເປັນທີ່ຕ້ອງການຂອງຕະຫລາດຫລາຍຂຶ້ນ.

ສະພາບໍລິຫານ ໄດ້ເຫັນດີດ້ານຫຼັກການໃນການສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນ ຈຳກັດ, ພ້ອມທັງໄດ້ ມອບໃຫ້ຄະນະບໍລິຫານ ທຄຕລ ຄົ້ນຄວ້າດ້ານການສ້າງຕັ້ງ-ດຳເນີນງານບໍລິສັດດັ່ງກ່າວໃຫ້ມີປະສິດທິຜົນ, ເພື່ອເປັນ ພື້ນຖານດ້ານນິຕິກຳໃຫ້ແກ່ ທຄຕລ ໃນການດຳເນີນການສ້າງຕັ້ງຕາມຂັ້ນຕອນຢ່າງສອດຄ່ອງກັບລະບຽບການ ຈຶ່ງຂໍສະ ເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງການສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນ. ສຳລັບເງື່ອນໄຂລະອຽດ ສະເໜີກອງປະຊຸມຜູ້ຖືຮຸ້ນມອບອຳນາດໃຫ້ສະພາບໍລິຫານ ພິຈາລະນາຮັບຮອງບັນຫາໃດໆທີ່ຕິດພັນກັບການສ້າງຕັ້ງ ບໍລິສັດດັ່ງກ່າວ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ ຈະຖືວ່າຖືກຮັບຮອງເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງ ປະຊຸມ.

ວາລະທີ 5: ພິຈາລະນາ ແລະ ຮັບຮອງເອົາຜູ້ກວດສອບອິດສະຫຼະປະຈຳປີ 2022.

ອີງຕາມການຄົ້ນຄວ້າ ແລະ ຜ່ານການປະມູນຕາມລະບຽບທີ່ກ່ຽວຂ້ອງ, ທຄຕລ ໄດ້ເລືອກເອົາບໍລິສັດ ພຣາຍສວໍ ເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ (PWC) ເປັນຜູ້ກວດສອບຖານະການເງິນ ທຄຕລ ປະຈຳປີ 2022 ໂດຍລາຄາ

ສຳລັບການກວດສອບບັນຊີ ແລະ ການທົບທວນຂອບເຂດເງິນກູ້ ແມ່ນ 920.000.000 ກີບ (ເກົ້າຮ້ອຍຊາວລ້ານກີບ ຖ້ວນ). ການບໍລິການກວດສອບ ລວມມີການກວດສອບຕາມມາດຕະຖານບັນຊີສາກົນ ແລະ ມາດຕະຖານບັນຊີລາວ ເປັນພາສາລາວ-ພາສາອັງກິດ, ທົບທວນຖານະການເງິນປະຈຳ 06 ເດືອນຕົ້ນປີ ແລະ ກວດສອບປະຈຳປີ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາແລ້ວ ແລະ ເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາ.

ຄະແນນສຽງທີ່ຕ້ອງໃຊ້:

ວາລະນີ້ ຈະຖືວ່າຖືກຮັບຮອງເມື່ອມີຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງ ປະຊຸມ.

ທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ນະຄອນຫຼວງວຽງຈັນ, ວັນທີ: 29/10/2021

ບົດບັນທຶກ
ກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈຳປີ 2021.

ກອງປະຊຸມຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝວິສາມັນ ປະຈຳປີ 2021 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ໄດ້ຖືກຈັດຂຶ້ນໃນເວລາ 14:30 ໂມງ ຫາ 15:00 ໂມງ ຂອງວັນທີ 29 ຕຸລາ 2021 ທີ່ຫ້ອງປະຊຸມ ຊັ້ນ 3 ໂຮງແຮມເມືອງແຫ່ງ, ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ 19 ທ່ານ, ຜູ້ມອບສິດຈຳນວນ 163 ທ່ານ ຊຶ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 153.161.186 ຮຸ້ນ, ນັບທັງ 2.702.001 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 73,733% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 54.562.114 ຮຸ້ນ ເທົ່າກັບ 26,267% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

- ຕາງໜ້າຜູ້ຖືຮຸ້ນລັດຖະບານທີ່ເຂົ້າຮ່ວມກອງປະຊຸມ ໂດຍ ທ່ານ ປະສົມເພັດ ຄຳຕັນ, ຮອງຫົວໜ້າກົມຄຸ້ມຄອງວິສາຫະກິດລັດລົງທຶນ-ປະກັນໄພ ກະຊວງການເງິນ;
- ຕາງໜ້າຂາຮຸ້ນຍຸດທະສາດໂດຍ Mr. Stephane Urbain, ຜູ້ອຳນວຍການທະນາຄານລາວຝລັ່ງ ຈຳກັດ;

ຫຼັງຈາກການກ່າວເປີດກອງປະຊຸມ ປະທານກອງປະຊຸມ ໄດ້ແນະນຳ ລະບຽບການດຳເນີນກອງປະຊຸມ ແລະ ວິທີລົງຄະແນນສຽງ. ຈາກນັ້ນກອງປະຊຸມຈຶ່ງໄດ້ດຳເນີນແຕ່ລະວາລະຕາມລຳດັບ.

ກອງປະຊຸມ ໄດ້ພິຈາລະນາ, ມີຄຳເຫັນ ແລະ ມີການຕົກລົງໃນແຕ່ລະວາລະ ດັ່ງນີ້:

ວາລະທີ 1: ຮັບຮອງບົດບັນທຶກຂອງກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2020.

ບົດບັນທຶກກອງປະຊຸມຜູ້ຖືຮຸ້ນຂອງ ທຄຕລ ປະຈຳປີ 2020 ທີ່ຈັດຂຶ້ນໃນວັນທີ 30 ເມສາ 2021 ໄດ້ຖືກເປີດເຜີຍຢ່າງສອດຄ່ອງກັບກົດລະບຽບທີ່ກ່ຽວຂ້ອງແລ້ວ;

ຈາກນັ້ນ ປະທານກອງປະຊຸມ ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ.

☞ ກອງປະຊຸມ ໄດ້ມີມະຕິຮັບຮອງບົດບັນທຶກຂອງກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2020 ດ້ວຍການລົງ ຄະແນນສຽງໃນກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 153.161.186 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2: ຮັບຊາບການລາຍງານ ຜົນການດຳເນີນງານຂອງ ທຄຕລ ໄລຍະ 6 ເດືອນ ປີ 2021:

ທ່ານ ຄຳພຸດ ສິດທິລາດ ຜູ້ອຳນວຍການ ທຄຕລ, ລາຍງານຫຍໍ້ການເຄື່ອນໄຫວທີ່ພົ້ນເດັ່ນ ແລະ ຕີລາຄາຜົນການດຳເນີນທຸລະກິດໄລຍະ 6 ເດືອນຕົ້ນປີ 2021:

❖ **ການເຄື່ອນໄຫວຂອງ ທຄຕລ ທີ່ພົ້ນເດັ່ນໃນໄລຍະ 6 ເດືອນ ປີ 2021 ຜ່ານມາໂດຍຫຍໍ້**

- ໄດ້ຈ່າຍເງິນປັນຜົນປະຈຳປີ 2020 ໃຫ້ແກ່ຂາຮຸ້ນທັງໝົດຂອງ ທຄຕລ ຈຳນວນ 560ກີບ/ຮຸ້ນ;
- ໄດ້ມີການປ່ຽນແປງໃນລະດັບຄະນະອຳນວຍການ ຕາມການຕົກລົງຂອງສະພາບໍລິຫານ ດັ່ງນີ້:
  1) ຍົກຍ້າຍທອງຜູ້ອຳນວຍການ 1 ທ່ານ ເພື່ອໄປຮັບໜ້າທີ່ໃໝ່ຢູ່ທະນາຄານທຸລະກິດລັດແຫ່ງອື່ນ;
  2) ອະນຸມັດການລາອອກສ້າງເສດຖະກິດຄອບຄົວຂອງທອງຜູ້ອຳນວຍການ 1 ທ່ານ;
  3) ແຕ່ງຕັ້ງທອງຜູ້ອຳນວຍການ 4 ທ່ານ;
  4) ຮັບທອງການຍົກຍ້າຍທ່ານ ພຸຂົງ ຈັນທະຈັກ ຜູ້ອຳນວຍການ ທຄຕລ (ຜູ້ເກົ່າ) ເພື່ອໄປຮັບໜ້າທີ່ໃໝ່ຢູ່ ທະນາຄານແຫ່ງ ສປປ ລາວ ແລະ ແຕ່ງຕັ້ງທ່ານ ຄຳພຸດ ສິດທິລາດ ເປັນຜູ້ອຳນວຍການ ທຄຕລ (ຜູ້ໃໝ່);
- ໄດ້ຂະຫຍາຍການຊຳລະແບບທັນສະໄໝໄປສູ່ບໍລິສັດຊັ້ນນຳຈຳນວນໜຶ່ງຄື: ຮ່ວມມືກັບບໍລິສັດເອັມພອຍມາກ ການຄ້າ ຈຳກັດ ໃນການຊຳລະສະສາງສິນຄ້າ, ບໍລິການຜ່ານ QR Code; ພັດທະນາລະບົບເຊື່ອມຕໍ່ ແລະ ໂອນເງິນຮ່ວມກັບບໍລິສັດ Umoney & MMoney;
- ເປີດໂຕຜະລິດຕະພັນບັດ ATM UnionPay ເປັນບັດຊິບ (Chip)
- ເລີ່ມນຳໃຊ້ລະບົບ Core-Banking ໃໝ່ຂອງ ທຄຕລ ທົດລະບົບ ໃນເດືອນເມສາ 2021
- ຮັບທອງລະບຽບ ແລະ ບັນດາ DATA Dictionary ຂອງໂຄງການ DATA Governance ຂອງ ທຄຕລ.

❖ **ຜົນການດຳເນີນທຸລະກິດ 06 ເດືອນຕົ້ນປີ 2021**

- **ຍອດຊັບສິນ/ໜີ້ສິນ:** 59.564,66 ຕື້ກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 104,70% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 19,93%;
- **ຍອດເງິນກູ້ທັງໝົດ:** 29.438,16 ຕື້ກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 98,98% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 4,34%;
- **ຍອດເງິນຝາກ:** 53.439,06 ຕື້ກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 106,24%; ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 21,95%;
- **ທຶນທັງໝົດ:** 2.131,37 ຕື້ກີບ ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 79,85%; ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 5,85%;
- **ກຳໄລກ່ອນອາກອນ:** 79,57 ຕື້ກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 25,34%;
- **ກຳໄລຫຼັງອາກອນ:** 37,30 ຕື້ກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 14,85%.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ.

- ກອງປະຊຸມ ໄດ້ມີມະຕິຮັບຮອງການລາຍງານ ຜົນການດຳເນີນງານຂອງ ທຄຕລ ໄລຍະ 6 ເດືອນ ປີ 2021 ດ້ວຍການລົງ ຄະແນນສຽງໃນກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 153.161.186 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3: ຮັບຮອງການດັດແກ້ແຜນການປີ 2021 ຂອງ ທຄຕລ:

ທ່ານ ຄຳພຸດ ສິດທິລາດ ຜູ້ອຳນວຍການ ທຄຕລ, ລາຍງານກ່ຽວກັບຜົນກະທົບຈາກການແຜ່ລະບາດຂອງ ພະຍາດໂຄວິດໃນຮອບໃໝ່ ມັນໄດ້ສົ່ງຜົນກະທົບໂດຍກົງ ແລະ ທາງອ້ອມເຖິງ ການດຳເນີນທຸລະກິດຂອງ ທຄຕລ, ຕິດພັນກັບການຄຸ້ມຄອງບໍລິການສິນເຊື່ອທີ່ເປັນລາຍຮັບຫຼັກຂອງ ທຄຕລ, ເມື່ອຫົວໜ່ວຍທຸລະກິດໄດ້ຮັບຜົນກະທົບ ຈະສົ່ງຜົນຕໍ່ການເລື່ອນຊຳລະດອກເບ້ຍ ແລະ ຕົ້ນທຶນໃຫ້ທະນາຄານ. ການປະຕິບັດນະໂຍບາຍການຜ່ອນຜັນເລື່ອນ ການຊຳລະຕົ້ນທຶນ ແລະ ດອກເບ້ຍ ໃຫ້ແກ່ລູກຄ້າທີ່ໄດ້ຮັບຜົນກະທົບໃນແຕ່ລະລະດັບນັ້ນ ຍັງເຫັນໄດ້ວ່າກຸ່ມລູກຄ້າ ຈຳນວນນຶ່ງທີ່ມີຄວາມສ່ຽງສູງຫຼາຍຈະບໍ່ສາມາດຊຳລະຄືນທັງຕົ້ນທຶນ ແລະ ດອກເບ້ຍ ຕາມກຳນົດເວລາສັນຍາ ຫຼື ຕາມ ນະໂຍບາຍທີ່ໄດ້ຜ່ອນຜັນໄປ ທຄຕລ ຕ້ອງໄດ້ອອກລາຍຈ່າຍທີ່ຕິດພັນເພື່ອປ້ອງກັນຄວາມສ່ຽງໃນທ້າຍໄຕມາດ 4 ເພີ່ມຂຶ້ນຈາກແຜນການທີ່ວາງໄວ້; ສ່ວນແຜນການແກ້ໄຂໜີ້ໃນໄລຍະປີ 2021 ແມ່ນຍັງບໍ່ທັນສາມາດຈັດຕັ້ງປະຕິບັດ ໄດ້ຕາມແຜນການເນື່ອງຈາກການດຳເນີນປະກາດຂາຍຫຼັກຊັບແມ່ນມີຄວາມຫຍຸ້ງຍາກບໍ່ສາມາດຂາຍໄດ້ ແລະ ລາຄາ ກໍ່ຕ່ຳເນື່ອງຈາກສະພາບເສດຖະກິດມີຄວາມຫຍຸ້ງຍາກ;

ດ້ານລາຍຮັບຕ່າງໆໃນທຸລະກິດຂອງ ທຄຕລ ສາມາດປະຕິບັດໄດ້ດີມີແນວໂນ້ມລື່ນແຜນການເລັກນ້ອຍ ເປັນຕົ້ນແມ່ນລາຍຮັບຄ່າທຳນຽມບໍລິການ, ລາຍຮັບດອກເບ້ຍຈາກພັດທະບັດ ແລະ ລາຍຮັບອື່ນໆ. ກົງກັນຂ້າມດ້ານ ລາຍຈ່າຍໃນທຸລະກິດທີ່ເພີ່ມຂຶ້ນສູງໂດຍສະເພາະແມ່ນລາຍຈ່າຍທີ່ຕິດພັນກັບດອກເບ້ຍເງິນຝາກທີ່ເພີ່ມຂຶ້ນ; ນອກນັ້ນ ລາຍຈ່າຍເງິນແຮ-ຄ່າເສື່ອມອາດເພີ່ມຂຶ້ນຕາມຄວາມສ່ຽງຂອງລູກຄ້າສິນເຊື່ອທີ່ຫຼຸດເກຼດ. ສ່ວນດ້ານລາຍຈ່າຍອື່ນໆໃນ ການດຳເນີນງານແມ່ນສາມາດຄວບຄຸມໄດ້ ເປັນຕົ້ນແມ່ນລາຍຈ່າຍພະນັກງານ, ລາຍຈ່າຍບໍລິຫານ, ລາຍຈ່າຍຫຼ້ຽຫ້ຽນ ເນື່ອງຈາກ ທຄຕລ ໄດ້ໂຈະການຮັບພະນັກງານໃໝ່, ໂຈະການຂະຫຍາຍໜ່ວຍບໍລິການ ແລະ ເນັ້ນການປະຢັດຄວບ ຄຸມລາຍຈ່າຍເພື່ອເປັນການຫຼຸດຜ່ອນທາງດ້ານຕົ້ນທຶນໃນການບໍລິຫານໃຫ້ຫຼາຍຂຶ້ນໃນໄລຍະສະພາບເສດຖະກິດທີ່ພົບ ຄວາມຫຍຸ້ງຍາກ ແລະ ຫຼຸດຜ່ອນຄວາມສ່ຽງໃນອານາຄົດ.

ສະນັ້ນ, ທຄຕລ ຈຳເປັນຕ້ອງໄດ້ຂໍສະເໜີດັດແກ້ແຜນທຸລະກິດບາງດ້ານທີ່ອາດຈະບໍ່ສາມາດປະຕິບັດໄດ້ເຊັ່ນ:

1. **ດັດແກ້ແຜນທຸລະກິດ,** ມີລາຍການສຳຄັນດັ່ງນີ້:
- ຍອດຊັບສິນ/ໜີ້ສິນ: ຈາກແຜນເດີມ 56.893,30 ຕື້ກີບ, ເປັນ 62.298,80 ຕື້ກີບ;
- ຍອດເງິນຝາກ: ຈາກແຜນເດີມ 50.300,00 ຕື້ກີບ, ເປັນ 56.000,00 ຕື້ກີບ;
- ຍອດເງິນກູ້ທັງໝົດ: ຈາກແຜນເດີມ 29.743,00 ຕື້ກີບ, ເປັນ 24.627,00 ຕື້ກີບ;
- ກຳໄລກ່ອນອາກອນ: ຈາກແຜນເດີມ 314,00 ຕື້ກີບ, ເປັນ **26,00** ຕື້ກີບ;
2. **ແຜນຮັບພະນັກງານໃໝ່**: ບໍ່ຮັບພະນັກງານ (ຈາກເບື້ອງຕົ້ນຂຶ້ນແຜນປະກອບພະນັກງານໃໝ່ ທົ່ວລະບົບ ຈຳນວນ 87 ຄົນ);
3. **ແຜນການຂະຫຍາຍຕາໜ່າງບໍລິການ:** ຍົກເລີກແຜນຂະຫຍາຍໜ່ວຍບໍລິການ (ຈາກແຜນເດີມຂຶ້ນ ແຜນຂະຫຍາຍ 8 ໜ່ວຍບໍລິການ) ແລະ ຍົກເລີກແຜນການສ້າງຕັ້ງສາຂາໄຊສົມບຸນ.

ຈາກນັ້ນ ປະທານກອງປະຊຸມ ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ.

☞ ກອງປະຊຸມ ໄດ້ມີມະຕິຮັບຮອງການດັດແກ້ ແຜນການ 2021 ດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 153.161.186 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ຮັບຮອງການແຕ່ງຕັ້ງສະພາບໍລິຫານຊຸດໃໝ່ຂອງ ທຄຕລ:

ທ່ານ ຄຳພຸດ ສິດທິລາດ ຜູ້ອຳນວຍການ ທຄຕລ, ລາຍງານກ່ຽວກັບສະພາບໍລິຫານ ທຄຕລ ຊຸດປະຈຸບັນ ໄດ້ຮັບການແຕ່ງຕັ້ງຈາກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2017 ທີ່ຈັດຂຶ້ນໃນວັນທີ 27 ເມສາ 2018 ແລະ ໄດ້ຮັບການຕໍ່ອາຍຸການມາແລ້ວ ໃນກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019 ແລະ ກອງປະຊຸມຜູ້ຖືຮຸ້ນປະຈຳປີ 2020 ຄັ້ງລະ 1 ປີ.

ເພື່ອຮັບປະກັນໃຫ້ການດຳເນີນງານຂອງສະພາບໍລິຫານມີປະສິດທິຜົນດີຂຶ້ນ, ທຄຕລ ໄດ້ຄົ້ນຄວ້ານຳສະເໜີຂຶ້ນເທິງເພື່ອເພີ່ມຈຳນວນສະມາຊິກສະພາບໍລິຫານຊຸດໃໝ່ຂອງ ທຄຕລ ຈາກ 7 ທ່ານ ເປັນ 9 ທ່ານ, ມີອາຍຸການ 2 ປີ ນັບແຕ່ຖືກຮັບຮອງຈາກກອງປະຊຸມຄັ້ງນີ້ ເຊິ່ງລາຍຊື່ເປົ້າໝາຍບຸກຄະລາກອນ ເພື່ອສະເໜີເປັນສະພາບໍລິຫານ ທຄຕລ ຊຸດໃໝ່ປະກອບດ້ວຍ:

1. ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ	ຮອງລັດຖະມົນຕີກະຊວງການເງິນ, ປະທານ
2. ທ່ານ ຄຳສຸກ ສຸນດາລາ	ສະມາຊິກອິດສະລະ, ຮອງປະທານ
3. ທ່ານ ຄຳພຸດ ສິດທິລາດ	ຜູ້ອຳນວຍການ ທຄຕລ, ສະມາຊິກ
4. ທ່ານ ປະສົມພັດ ຄຳຕັນ	ຮອງຫົວໜ້າກົມຄຸ້ມຄອງວິສາຫະກິດລັດລົງທຶນ-ປະກັນໄພ ກະຊວງການເງິນ, ສະມາຊິກ
5. ທ່ານ ສະຕີເຟັນ ມັງເຈຍວາກາ (Stephane Mangiavacca) ຕາງໜ້າ COFIBRED, ສະມາຊິກ	
6. ທ່ານ ຣສ. ທອງພັດ ຈັນທະນີວົງ	ຮອງຄະນະບໍດີຄະນະເສດຖະສາດແລະບໍລິຫານທຸລະກິດ; ສະມາຊິກອິດສະລະ
7. ທ່ານ ນ. ລັດດາວັນ ຊົງວິໄລ	ຮັກສາການຫົວໜ້າສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກແລະປັບປຸງໂຄງສ້າງເສດຖະກິດ; ສະມາຊິກອິດສະລະ
8. ທ່ານ ສອນໄຊ ສີລາເພັດ	ຮອງປະທານສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ, ສະມາຊິກອິດສະລະ;
9. ທ່ານ ວຽງສຸກ ຈຸນທະວົງ	ຮອງຜູ້ອຳນວຍການ ທຄຕລ, ສະມາຊິກ.

☞ ກອງປະຊຸມ ໄດ້ມີມະຕິຮັບຮອງເອົາສະພາບໍລິຫານ ທຄຕລ ຊຸດໃໝ່ ດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 153.161.186 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ປະທານກອງປະຊຸມ ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ.

❖ ທ່ານ ປະທານກອງປະຊຸມ ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມອື່ນໆຂອງ ທຄຕລ, ແຕ່ບໍ່ມີຄຳຖາມ.

ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ພ້ອມທັງໄດ້ປະກາດປິດກອງປະຊຸມໃນເວລາ 15:00 ໂມງ ຂອງວັນດຽວກັນ.

ປະທານກອງປະຊຸມ	**ຜູ້ບັນທຶກ**
ບຸນເຫຼືອ ສິນໄຊວໍຣະວົງ	ສອນນາລິນ ແສງມະນີ

ການເຄື່ອນໄຫວຂອງ ທຄຕລ ປະຈຳປີ 2021 ໂດຍສັງເຂບ

1. ການເຄື່ອນໄຫວວຽກງານຕ່າງໆທີ່ພົ້ນເດັ່ນໂດຍຫຍໍ້

ໃນໄລຍະ 1 ປີຜ່ານມາ ທຄຕລ ເຄື່ອນໄຫວວຽກງານສຳເລັດຫຼາຍດ້ານເຊັ່ນ:

- ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທຄຕລ 5 ຄັ້ງ;
- ຈັດກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ ຈຳນວນ 4 ຄັ້ງ ແລະ ສະໄໝວິສາມັນ ຈຳນວນ 7 ຄັ້ງ;
- ຈັດກອງປະຊຸມຜູ້ຖືຮຸ້ນ ທຄຕລ ຈຳນວນ 2 ຄັ້ງ (ສາມັນ 1 ຄັ້ງ, ວິສາມັນ 1 ຄັ້ງ);
- ຮັບຮອງແຜນດຳເນີນທຸລະກິດ ປະຈຳປີ 2021 ແລະ ແຜນຍຸດທະສາດໄລຍະຍາວຂອງ ທຄຕລ 2021-2025;
- ປັບປຸງແຜນທຸລະກິດ ທຄຕລ ປະຈຳປີ 2021 ພາຍຫຼັງກອງປະຊຸມວິສາມັນຜູ້ຖືຮຸ້ນ;
- ດຳເນີນການຂຶ້ນແຜນດຳເນີນທຸລະກິດ ທຄຕລ ປະຈຳປີ 2022;
- ສະເໜີຮັບຮອງການຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງພາຍໃນ ທຄຕລ ຜ່ານສະພາບໍລິຫານ;
- Go-Live ລະບົບ Core-Banking ໃໝ່ຂອງ ທຄຕລ ທົ່ວລະບົບ;
- ຮັບຮອງລະບຽບ ແລະ ບັນດາ DATA Dictionary ຂອງໂຄງການ DATA Governance ຂອງ ທຄຕລ;
- ແຕ່ງຕັ້ງ ແລະ ມອບຮັບໜ້າທີ່ລະຫວ່າງ ຜູ້ອຳນວຍການ ທຄຕລ ຄົນໃໝ່ ແລະ ຄົນເກົ່າ;
- ຮ່ວມມືກັບບໍລິສັດເອັມພອຍມາການ້າ ຈຳກັດ ໃນການຊຳລະສະສາງສິນຄ້າ, ບໍລິການຜ່ານ QR Code;
- ຮ່ວມມືກັບກົມຊັບສິນທາງປັນຍາ, ກະຊວງອຸດສະຫະກຳ ແລະ ການຄ້າ ໃນການໃຫ້ບໍລິການຊຳລະຄ່າ ທຳນຽມ ແລະ ຄ່າບໍລິການ ຜ່ານລະບົບຂອງທະນາຄານ;
- ພັດທະນາລະບົບເຊື່ອມຕໍ່ ແລະ ໂອນເງິນຮ່ວມກັບບໍລິສັດ Umoney & MMoney;
- ເປີດໂຕຜະລິດຕະພັນບັດ ATM UnionPay ມາປ່ຽນເປັນບັດຊິບ (Chip) ແລະ ເປີດໂຕບັດ BCEL Visa Platinum;
- ປິດການບໍລິການວັນເສົາ-ວັນອາທິດຂອງໜ່ວຍບໍລິການ;
- ປິດໜ່ວຍບໍລິການລາວບາວ ເລີ່ມຕັ້ງແຕ່ວັນທີ 30/07/2021;
- ສຳເລັດການຮັບຮອງບົດກວດສອບຖານະການເງິນ ທຄຕລ ປະຈຳ 06 ເດືອນຕົ້ນປີ 2021 ທຄຕລ ຈາກ ບໍລິສັດກວດສອບພາຍນອກ;
- ໄດ້ເລື່ອນການຊອກຫາຄູ່ຮ່ວມທຶນຍຸດທະສາດໃໝ່ (ຂາຍຮຸ້ນ 9%) ອອກໄປກ່ອນ ໃນໄລຍະທີ່ສະພາບບໍ່ ເໝາະສົມ;
- ປະຕິບັດມາດຕະການປ້ອງກັນພະຍາດໂຄວິດ-19 ໃນແຕ່ລະໄລຍະຕາມແຈ້ງການຂອງຄະນະສະເພາະກິດຂັ້ນ ສູນກາງ ແລະ ທ້ອງຖິ່ນ ເພື່ອປ້ອງກັນການແຜ່ລະບາດ.

2. ຜົນການດຳເນີນທຸລະກິດ ປະຈຳປີ 2021

- ຍອດຊັບສິນ/ໜີ້ສິນ: 68.236.991 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 109,53%;
- ຍອດເງິນກູ້ທັ້ງໝົດ: 30.080.974 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 122,15%;
- ຍອດເງິນຝາກ: 61.802.739 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 110,36%;
- ກຳໄລກ່ອນອາກອນ: 12.585 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 48,40%;
- ກຳໄລຫຼັງອາກອນ: 11.410 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 54,86%.

3. ການປະຕິບັດແຜນປະກອບອັດຖະຕັກນິກ, ກໍ່ສ້າງ ແລະ ສ້ອມແປງ

ການປະຕິບັດແຜນປະກອບອັດຖະຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ທົ່ວລະບົບ ປະຈຳປີ 2021 ປະຕິບັດໄດ້ 145,74 ຕື້ກີບ ທຽບໃສ່ແຜນການປີ 2021 ປະຕິບັດເທົ່າກັບ 58% ດັ່ງລາຍລະອຽດລຸ່ມນີ້:

ລຳດັບ	ເນື້ອໃນ	ສົມທຽບແຜນ %
1	ສ້າງຕັ້ງສາຂາ	0%
2	ສິດນຳໃຊ້ທີ່ດິນ	28%
3	ໂປຼເຈັກ	143%
4	ສິ່ງປຸກສ້າງ	2%
5	ພາຫະນະ	22%
6	ສິ່ງຕິດຕັ້ງຈັດວາງ	38%
7	ເຄື່ອງຈັກຮັບໃຊ້ຫ້ອງການ	90%
8	ເຄື່ອງຮັບໃຊ້ຫ້ອງການ	52%

4. ແຜນຂະຫຍາຍໜ່ວຍບໍລິການ

ພາຍໃນປີ 2021 ທຄຕລ ໄດ້ປິດໜ່ວຍບໍລິການ 1 ໜ່ວຍຄື: ໜ່ວຍບໍລິການລາວບາວ ຂຶ້ນກັບສາຂາ ສະຫວັນນະເຂດ. ພ້ອມກັນນັ້ນ, ທຄຕລ ໄດ້ໂຈະການຂະຫຍາຍໜ່ວຍບໍລິການໃໝ່ທັງໝົດ (ແຜນເດີມຂຶ້ນແຜນຂະຫຍາຍ 8 ໜ່ວຍບໍລິການ) ແລະ 1 ສາຂາ ຄື: ຍົກລະດັບໜ່ວຍບໍລິການໄຊສົມບູນ ໃຫ້ເປັນສາຂາ ແມ່ນໃຫ້ຮັກສາເປັນໜ່ວຍບໍລິການຄືເກົ່າໃຫ້ຂຶ້ນກັບສາຂາຊຽງຂວາງ.

5. ການປະຕິບັດແຜນງານ, ໂຄງການ ແລະ ແຜນວຽກ

ລຳດັບ	ລາຍການ (11 ແຜນງານ, 42 ໂຄງການ)	ຈຳນວນ	2021
		268	**58%**
ຍຸດທະສາດ 1	**ສ້າງຄວາມເຂັ້ມແຂງໃຫ້ອົງກອນຮອບດ້ານ**	**149**	**56%**
ແຜນງານ 1	ການບໍລິຫານການເງິນ ແລະ ເພີ່ມປະສິດທິພາບການດຳເນີນທຸລະກິດໃຫ້ຍືນຍົງ	62	79%
ແຜນງານ 2	ການຄຸ້ມຄອງ ແລະ ບໍລິຫານສິນເຊື່ອ	33	53%
ແຜນງານ 3	ການພັດທະນາດ້ານບຸກຄະລາກອນໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ	26	51%
ແຜນງານ 4	ສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ສ້າງພື້ນຖານຕ້ານການຟອກເງິນໃຫ້ເຂັ້ມແຂງ	26	67%
ແຜນງານ 5	ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຖານສາກົນ ແລະ ສ້າງມາດຕະຖານໃຫ້ເປັນທະນາຄານອາຊຽນ Qualified ASEAN Bank (QAB)	2	31%
ຍຸດທະສາດ 2	**ທັນເປັນທັນສະໄໝ ໂດຍນຳໃຊ້ເຕັກໂນໂລຊີ ເພື່ອ ນະວັດຕະກຳໃໝ່ໆ ໃນການດຳເນີນທຸລະກິດ ກ້າວສູ່ຍຸກເສດຖະກິດດິຈິຕອລ**	**107**	**66%**
ແຜນງານ 6	ການພັດທະນາ ແລະ ຄຸ້ມຄອງລະບົບໄອທີ	25	62%
ແຜນງານ 7	ຄຸ້ມຄອງບໍລິຫານຂໍ້ມູນ ແລະ ການພັດທະນາວຽກງານສະຖິຕິ ໃຫ້ທັນສະໄໝໄດ້ມາດຖານສາກົນ ແລະ ມີຄຸນນະພາບ	29	91%
ແຜນງານ 8	ພັດທະນາຜະລິດຕະພັນ ເພື່ອຫັນສູ່ການບໍລິການ ໃນຮູບແບບ Digital Banking	53	45%
ຍຸດທະສາດ 3	**ສ້າງການຄຸ້ມຄອງ ເຊິ ບໍລິການຕາມມາດຕະຖານສາກົນ**	**12**	**50%**
ແຜນງານ 9	ການປັບປຸງ, ພັດທະນາລະບົບບັນຊີ ແລະ ມາດຕະຖານການລາຍງານການເງິນ	6	28%
ແຜນງານ 10	ພັດທະນາ ແລະ ປັບປຸງລະບົບກວດກາໃຫ້ເຂັ້ມແຂງໄດ້ມາດຕະຖານ.	3	88%
ແຜນງານ 11	ພັດທະນາໂຄງການ PCI Compliance ຫຼື (Payment Card Industry Data Security Standard)	3	35%

6. ການແບ່ງປັນກຳໄລຫຼັງອາກອນເຂົ້າຄັງຕ່າງໆ


ອີງໃສ່ຜົນການດຳເນີນທຸລະກິດຂອງ ທຄຕລ ປະຈຳປີ 2021 ທີ່ພົບກັບຄວາມຫຍຸ້ງຍາກຫຼາຍດ້ານ ເຮັດໃຫ້ ບໍ່ສາມາດປະຕິບັດໄດ້ຕາມແຜນການໃນເບື້ອງຕົ້ນ ຈຶ່ງໄດ້ມີການປັບປຸງແຜນທຸລະກິດໃໝ່ ແຕ່ກໍ່ບໍ່ສາມາດບັນລຸ ແຜນທີ່ວາງໃວ້ ສະນັ້ນ, ໃນປີ 2021 ແມ່ນ ທຄຕລ ຈຶ່ງບໍ່ສາມາດຈັດແບ່ງຈ່າຍເງິນປັນຜົນໃຫ້ແກ່ຂາຮຸ້ນໄດ້ ແລະ ທຄຕລ ສະເໜີຂໍແບ່ງກຳໄລຫຼັງຫັກອາກອນທີ່ຍັງເຫຼືອເຂົ້າຄັງຕ່າງໆຕາມລະບຽບການເຊັ່ນ:

- ຄັງສະສົມຕາມລະບຽບການ: 10%
- ຄັງຂະຫຍາຍທຸລະກິດ: 90%

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເອກະສານລາຍງານການເງິນ

31 ທັນວາ 2021



ໃບລາຍງານຜົນໄດ້ຮັບ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

	ບົດ ອະທິບາຍ	2021 ລ້ານກີບ	2020 ລ້ານກີບ
ລາຍຮັບດອກເບ້ຍ	5	2.244.913	2.407.369
ລາຍຈ່າຍດອກເບ້ຍ	5	(1.492.316)	(1.317.166)
ລາຍຮັບສຸດທິຈາກດອກເບ້ຍ	**5**	**752.597**	**1.090.203**
ລາຍຮັບຈາກຄ່າທຳນຽມ ແລະ ບໍລິການ	6	317.892	239.365
ລາຍຈ່າຍຈາກຄ່າທຳນຽມ ແລະ ບໍລິການ	6	(39.694)	(26.184)
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ບໍລິການ	**6**	**278.198**	**213.181**
ກຳໄລສຸດທິ ຈາກການຊື້-ຂາຍເງິນຕາຕ່າງປະເທດ	7	3.913	42.236
ຂາດທຶນສຸດທິ ຈາກການຊື້-ຂາຍຫຼັກຊັບອະນຸພັນ	8	171	-
ລາຍຮັບອື່ນໆຈາກການດຳເນີນງານ	9	180.385	36.166
ລາຍຮັບຈາກການດຳເນີນງານ		**1.215.264**	**1.381.786**
ລາຍຈ່າຍໃນການສູນເສຍຂອງເງິນໃຫ້ກູ້ຢືມແກ່ລູກຄ້າ	16	(649.075)	(474.399)
ການສູນເສຍຄ່າເສື່ອມມູນຄ່າຂອງການລົງທຶນການເງິນ	10	-	(39.501)
ລາຍຮັບສຸດທິຈາກການດຳເນີນງານ		**566.189**	**867.886**
ລາຍຈ່າຍບຸກຄະລາກອນ	11	(305.806)	(324.020)
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	20, 21	(81.350)	(77.007)
ຄ່າຫຼ້ຍຫ້ຽນຂອງສິດນຳໃຊ້ຊັບສິນ	22	(8.040)	(6.690)
ລາຍຈ່າຍອື່ນໆໃນການດຳເນີນງານ	12	(175.296)	(182.420)
ລວມລາຍຈ່າຍໃນການດຳເນີນງານ		**(570.492)**	**(590.137)**
ສ່ວນແບ່ງກຳໄລໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	19	16.888	21.845
ກຳໄລກ່ອນອາກອນ		**12.585**	**299.594**
ລາຍຈ່າຍອາກອນກຳໄລ	27.1	(1.175)	(56.381)
ກຳໄລສຸດທິ ໃນປີ		**11.410**	**243.213**
ກຳໄລຕໍ່ຮຸ້ນ (ກີບ)	34	**55**	**1.171**

ກະກຽມໂດຍ:

ອະນຸມັດໂດຍ:

ອະນຸມັດໂດຍ:

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທ່ານ ນ. ເດດນະພາ ໄຊຍະລາດ	ທ່ານ ສົມປະສິງ ໂພທິສານ	ທ່ານ ສາຍຈິດ ສົມມະວົງ
ຮອງຫົວໜ້າພະແນກບັນຊີສັງລວມ	ຫົວໜ້າພະແນກກວດກາພາຍໃນ	ຮອງຜູ້ອຳນວຍການ
ວັນທີ: 19 ເມສາ 2022	ວັນທີ: 19 ເມສາ 2022	ວັນທີ: 19 ເມສາ 2022

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 17 ເຖິງ 61 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານຜົນໄດ້ຮັບສັງລວມ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

	ບິດ ອະທິບາຍ	2021 ລ້ານກີບ	2020 ລ້ານກີບ
ກຳໄລສຸດທິ ໃນປີ		**11.410**	**243.213**
ລາຍຮັບ(ລາຍຈ່າຍ)ສັງລວມອື່ນໆ			
ການປ່ຽນແປງໃນມູນຄ່າຍຸຕິທຳຂອງການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ	17	1.534	-
ການສູນເສຍການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້	28	22.498	(667)
ອາກອນກຳໄລທີ່ກ່ຽວຂ້ອງກັບອົງປະກອບຂອງລາຍຮັບສັງລວມອື່ນໆ	27.3	-	133
ລາຍຮັບ(ລາຍຈ່າຍ)ສັງລວມອື່ນໆສຳລັບປີ ຫັກອາກອນ		**24.032**	**(534)**
ລວມລາຍຮັບ(ລາຍຈ່າຍ)ສັງລວມອື່ນໆສຳລັບປີ ຫັກອາກອນ		**35.442**	**242.679**

ກະກຽມໂດຍ:

ທ່ານ ນ. ເດດນະພາ ໄຊຍະລາດ

ຮອງຫົວໜ້າພະແນກບັນຊີສັງລວມ
ວັນທີ: 19 ເມສາ 2022

ອະນຸມັດໂດຍ:

ທ່ານ ສົມປະສົງ ໂພທິສານ

ຫົວໜ້າພະແນກກວດກາພາຍໃນ
ວັນທີ: 19 ເມສາ 2022

ອະນຸມັດໂດຍ:

ທ່ານ ສາຍຈິດ ສົມມະວົງ

ຮອງຜູ້ອຳນວຍການ
ວັນທີ: 19 ເມສາ 2022

ບິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 17 ເຖິງ 61 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານຖານະການເງິນ
ໃນວັນທີ 31 ທັນວາ 2021

	ບິດ ອະທິບາຍ	2021 ລ້ານກີບ	2020 ລ້ານກີບ
ຊັບສິນ			
ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	13	19.022.276	12.836.829
ເງິນຝາກຢູ່ທະນາຄານອື່ນ	14	9.182.845	4.355.395
ເງິນໃຫ້ກູ້ຍືມແກ່ລູກຄ້າ	15	32.372.070	30.762.417
ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ	17	91.657	90.122
ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ	18	5.273.352	3.899.011
ການລົງທຶນໃນວິສາຫະກິດຂະຫນາດ ແລະ ວິສາຫະກິດປະສົມ ໂດຍການນຳໃຊ້ວິທີທຶນສ່ວນໄດ້ເສຍ -ສຸດທິ	19	643.318	614.434
ຊັບສິນບັດຖີທີ່ ແລະ ອຸປະກອນ	20	563.503	601.572
ຊັບສິນບັດຖີທີ່ບໍ່ມີຕົວຕົນ	21	293.321	245.873
ສິດໃນການນຳໃຊ້ຊັບສິນ	22	55.713	57.005
ອາກອນຊັບສິນເຍື່ອນຊຳລະ	27.3	37.015	37.015
ເງິນຈ່າຍລ່ວງໜ້າສຳລັບອາກອນກຳໄລ	27.2	24.015	-
ຊັບສິນອື່ນໆ	23	677.906	470.734
ລວມຊັບສິນ		**68.236.991**	**53.970.407**
ໜີ້ສິນ			
ເງິນຝາກຈາກທະນາຄານ ແລະ ສະຖາບັນການເງິນອື່ນໆ	24	5.269.436	3.482.800
ເງິນຝາກຈາກລູກຄ້າ	25	57.169.169	45.043.495
ເງິນກູ້ຍືມຈາກທະນາຄານອື່ນ	26	3.354.623	2.962.101
ໜີ້ຕ້ອງສົ່ງອາກອນໃນປີ	27.2	-	23.726
ໜີ້ຕ້ອງສົ່ງສັນຍາເຊົ່າ		29.595	23.059
ໜີ້ສິນອື່ນໆ	28	282.022	222.197
ລວມໜີ້ສິນ		**66.104.845**	**51.757.378**
ທຶນ			
ທຶນຈົດທະບຽນ	29	1.038.617	1.038.617
ຄ້ງສະສົມຕາມລະບຽບການ	30	831.667	753.399
ລາຍການສ້ງລວມອື່ນ		11.416	(12.616)
ກຳໄລສະສົມ		250.446	433.629
ລວມທຶນ		**2.132.146**	**2.213.029**
ລວມໜີ້ສິນ ແລະ ທຶນ		**68.236.991**	**53.970.407**

ກະກຽມໂດຍ:

ທ່ານ ນ. ເມດນະພາ ໄຊຍະລາດ
ຮອງຫົວໜ້າພະແນກບັນຊີສ້ງລວມ
ວັນທີ: 19 ເມສາ 2022

ອະນຸມັດໂດຍ:

ທ່ານ ສົມປະສິງ ໂພທິສານ
ຫົວໜ້າພະແນກກວດກາພາຍໃນ
ວັນທີ: 19 ເມສາ 2022

ທ່ານ ສາຍຈິດ ສົມມະວົງ
ຮອງຜູ້ອຳນວຍການ
ວັນທີ: 19 ເມສາ 2022

ບິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 17 ເຖິງ 61 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານສ່ວນປ່ຽນແປງທຶນ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

	ບົດ ອະທິບາຍ	ທຶນຈົດ ທະບຽນ ລ້ານກີບ	ຄັງສະສົມຕາມ ລະບຽບການ ລ້ານກີບ	ລາຍການສັງລວມອື່ນ: ການປະເມີນຄືນຜົນ ປະໂຫຍດພະນັກງານ ຫຼັງອອກການທີ່ ກຳນົດໄວ້ ລ້ານກີບ	ລາຍການສັງລວມອື່ນ: ຄັງສຳຮອງສຳລັບ ຫຼັກຊັບມີໄວ້ ເພື່ອຂາຍ ລ້ານກີບ	ກຳໄລສະສົມ ລ້ານກີບ	ລວມ ລ້ານກີບ
ຍອດເຫລືອໃນວັນທີ 31 ທັນວາ 2020		**1.038.617**	**753.399**	**(12.616)**	**-**	**433.629**	**2.213.029**
ແບ່ງສ່ວນສຳລັບເງິນປັນຜົນທີ່ໄດ້ຈ່າຍໃຫ້ຜູ້ຖືຮຸ້ນ ສຳລັບປີ 2020	35	-	-	-	-	(116.325)	(116.325)
ແບ່ງເຂົ້າຄັງສະສົມຕາມລະບຽບການພາຍໃນປີ 2020	30	-	78.268	-	-	(78.268)	-
ກຳໄລສຸດທິໃນປີ 2021		-	-	-	-	11.410	11.410
ການປະເມີນມູນຄ່າຄືນຂອງການລົງທຶນທາງການເງິນ - ປະເພດມີໄວ້ ເພື່ອຂາຍ		-	-	-	1.534		1.534
ການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້	28	-	-	22.498	-	-	22.498
ອາກອນກຳໄລທີ່ກ່ຽວຂ້ອງກັບອົງປະກອບຂອງລາຍຮັບສັງລວມອື່ນໆ	27.3	-	-	-	-	-	-
ຍອດເຫລືອໃນວັນທີ 31 ທັນວາ 2021		**1.038.617**	**831.667**	**9.882**	**1.534**	**250.446**	**2.132.146**

ກະກຽມໂດຍ:

ທ່ານ ນ. ເມດນະພາ ໄຊຍະລາດ

ຮອງຫົວໜ້າພະແນກບັນຊີສັງລວມ
ວັນທີ: 19 ເມສາ 2022

ອະນຸມັດໂດຍ:

ທ່ານ ສົມປະສິງ ໂພທິສານ

ຫົວໜ້າພະແນກກວດກາພາຍໃນ
ວັນທີ: 19 ເມສາ 2022

ອະນຸມັດໂດຍ:

ທ່ານ ສາຍຈິດ ສົມມະວົງ

ຮອງຜູ້ອຳນວຍການ
ວັນທີ: 19 ເມສາ 2022

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 17 ເຖິງ 61 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

	ບິດ ອະທິບາຍ	2021 ລ້ານກີບ	2020 ລ້ານກີບ
ກິດຈະກຳການດຳເນີນງານ			
ກຳໄລກ່ອນຫັກອາກອນ		**12.584**	**299.594**
ດັດແກ້ສຳລັບ:			
ລາຍຈ່າຍຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	20, 21, 22	89.390	83.697
ລາຍຈ່າຍຄ່າເສື່ອມມູນຄ່າ	16	649.075	474.399
ລາຍຈ່າຍຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້	28	8.784	9.938
ສ່ວນແບ່ງກຳໄລໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	19	(16.888)	(21.845)
ຂາດທຶນຈາກເງິນຕາຕ່າງປະເທດ		(113.343)	-
ສ່ວນປ່ຽນແປງໃນການສູນເສຍມູນຄ່າໃນການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ	10	-	39.501
ຂາດທຶນ/(ກຳໄລ)ຈາກການຂາຍແລະຊຳລະສະສາງ		12.340	(934)
ລາຍຮັບດອກເບ້ຍ	5	(2.244.913)	(2.407.369)
ລາຍຈ່າຍດອກເບ້ຍ	5	1.492.316	1.317.166
ລາຍຮັບເງິນປັນຜົນ	9	(3.835)	(3.835)
ກະແສເງິນສົດຈາກ ກຳໄລຈາກການດຳເນີນງານກ່ອນການປ່ຽນແປງດ້ານຊັບສິນ ແລະ ໜີ້ສິນ		**(114.490)**	**(209.688)**
ສ່ວນປ່ຽນແປງໃນຊັບສິນຈາກການດຳເນີນງານ			
ສ່ວນປ່ຽນແປງເງິນຝາກຢູ່ທະນາຄານອື່ນສຸດທິ		466.148	(824.784)
ສ່ວນປ່ຽນແປງເງິນໃຫ້ກູ້ຢືມແກ່ລູກຄ້າສຸດທິ		(4.276.295)	(2.865.785)
ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		83.857	-
ສ່ວນປ່ຽນແປງໃນຊັບສິນອື່ນໆ		(129.174)	(14.461)
ສ່ວນປ່ຽນແປງໃນໜີ້ສິນຈາກການດຳເນີນງານ			
ສ່ວນປ່ຽນແປງໃນເງິນຝາກກັບທະນາຄານອື່ນສຸດທິ		1.790.480	(567.033)
ສ່ວນປ່ຽນແປງໃນເງິນຝາກຈາກລູກຄ້າສຸດທິ		12.020.658	8.623.567
ສ່ວນປ່ຽນແປງໃນໜີ້ສິນອື່ນໆສຸດທິ		65.350	(98.819)
ສ່ວນປ່ຽນແປງໃນເງິນກູ້ຢືມຈາກທະນາຄານອື່ນສຸດທິ		311.146	(777.419)
ສ່ວນປ່ຽນແປງໃນໜີ້ສິນສັນຍາເຊົ່າສຸດທິ		2.218	11.720
ດອກເບ້ຍທີ່ໄດ້ຮັບ		1.093.618	937.963
ດອກເບ້ຍທີ່ໄດ້ຊຳລະ		(1.309.769)	(1.214.631)
ອາກອນທີ່ໄດ້ຊຳລະພາຍໃນປີ	27.2	(48.916)	(69.455)
ກະແສເງິນສົດສຸດທິຈາກການດຳເນີນງານ		**9.954.831**	**2.931.175**
ກິດຈະກຳການລົງທຶນ			
ການຊື້ ແລະ ປຸກສ້າງຊັບສົມບັດຖາວອນ ແລະ ສິ່ງກໍ່ສ້າງກຳລັງດຳເນີນ ແລະ ຊັບສົມບັດຖາວອນທີ່ພວມເຄື່ອນຍ້າຍ		(40.928)	(121.988)
ການຊື້ສິດການນຳໃຊ້ຊັບສິນ		(2.431)	(8.881)
ການຊື້ຊັບສົມບັດຖາວອນທີ່ບໍ່ມີຕົວຕົນ	21	(53.953)	(3.636)
ຮັບເງິນຈາກການສະສາງ/ຂາຍຊັບສົມບັດຖາວອນ		-	6.836
ຈ່າຍເງິນໃຫ້ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	19	(13.360)	(25.360)
ເງິນປັນຜົນຮັບຈາກວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	19	1.364	1.668
ເງິນປັນຜົນຮັບຈາກການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ	9	3.835	3.835
ຈ່າຍເງິນສຳລັບການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		-	(989.433)
ຮັບເງິນສຳລັບການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		1.738.371	1.052.017
ກະແສເງິນສົດສຸດທິທີ່ໄດ້ນຳໃຊ້ໃນກິດຈະກຳການລົງທຶນ		**1.632.898**	**(84.942)**

ບິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 17 ເຖິງ 61 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

	ບົດອະທິບາຍ	2021 ລ້ານກີບ	2020 ລ້ານກີບ
ກິດຈະກຳທາງການເງິນ			
ຈ່າຍເງິນສຳລັບເງິນປັນຜົນ	35	(116.325)	(168.879)
ຈ່າຍເງິນສຳລັບການຊຳລະສັນຍາເຊົ່າ		(474)	(2.909)
ກະແສເງິນສົດສຸດທິທີ່ນຳໃຊ້ໃນກິດຈະກຳທາງການເງິນ		**(116.799)**	**(171.788)**
ປ່ຽນແປງສຸດທິ ຂອງເງິນສົດ ແລະ ທຽບເທົ່າເງິນສົດ		**11.470.930**	**2.674.445**
ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ	**31**	**14.396.829**	**11.722.384**
ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ	**31**	**25.867.759**	**14.396.829**

ລາຍການທີ່ບໍ່ແມ່ນເງິນສົດຈາກກິດຈະກຳການທາງດ້ານການເງິນ ແລະ ການລົງທຶນ;

ການໄດ້ມາຂອງລາຍການການການຊື້ ແລະ ປຸກສ້າງຊັບສິນບັດຄົງທີ່ ແລະ ສິ່ງກໍ່ສ້າງ ກຳລັງດຳເນີນ ແລະ ຊັບສິນບັດຄົງທີ່ພວມເຄື່ອນຍ້າຍ	8.188	5.017
ການຊຳລະສະສາງກູ້ຢືມເງິນໃຫ້ລູກຄ້າ ແລະ ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ	3.196.569	591.452
ການຊື້ສິດການນຳໃຊ້ຊັບສິນ	4.318	-

ກະກຽມໂດຍ:

ທ່ານ ນ. ເດດນະພາ ໄຊຍະລາດ

ຮອງຫົວໜ້າພະແນກບັນຊີສັງລວມ
ວັນທີ: 19 ເມສາ 2022

ອະນຸມັດໂດຍ:

ທ່ານ ສົມປະສົງ ໂພທິສານ

ຫົວໜ້າພະແນກກວດກາພາຍໃນ
ວັນທີ: 19 ເມສາ 2022

ອະນຸມັດໂດຍ:

ທ່ານ ສາຍຈິດ ສົມມະວົງ

ຮອງຜູ້ອຳນວຍການ
ວັນທີ: 19 ເມສາ 2022

ແຜນດຳເນີນງານຂອງ ທຄຕລ ປະຈຳປີ 2022

1. ສະພາບເສດຖະກິດມະຫາພາກ 2022

ອີງຕາມລາຍງານຈາກອົງການ IMF ຄາດວ່າ ເສດຖະກິດໂລກຈະຂະຫຍາຍໂຕພຽງ 4,4%, ປັດໃຈຕົ້ນຕໍມາຈາກການລະບາດຂອງ Covid-19 ສາຍພັນໂອມິຄອນ, ຂໍ້ຂັດແຍ່ງລະຫວ່າງປະເທດມະຫາອຳນາດ, ອັດຕາເງິນເຟີ້ທີ່ມີແນວໂນ້ມເພີ່ມຂຶ້ນຈາກ ລາຄານ້ຳມັນທີ່ເພີ່ມຂຶ້ນ, ນະໂຍບາຍສະໜັບສະໜຸນທາງການເງິນທີ່ຫຼຸດລົງໃນຫຼາຍປະເທດ ແລະ ຄວາມບໍ່ສະເໝີພາບດ້ານລາຍຮັບ ເຊິ່ງຈະສົ່ງຜົນກະທົບຕໍ່ການຟື້ນໂຕທາງເສດຖະກິດໂລກ ໂດຍສະເພາະບັນດາປະເທດກຳລັງພັດທະນາ. ນອກນັ້ນ, ທ່າອ່ຽງເສດຖະກິດຂອງປະເທດມະຫາອຳນາດ (ສະຫະລັດ, ຈີນ, ຂົງເຂດເອີຣົບ) ຄາດວ່າຈະຊະລໍຕົວໃນປີ 2022.

ໃນປີ 2022 ເສດຖະກິດຂອງ ສປປ ລາວ ຄາດວ່າຈະຂະຫຍາຍໂຕໃນທິດທາງທີ່ດີຂຶ້ນ ຖ້າທຽບໃສ່ປີຜ່ານມາ ໂດຍໃນລະດັບ 4 – 4,5%, ປັດໄຈສະໜັບສະໜຸນມາຈາກການເຕີບໂຕຂອງຂະແໜງອຸດສາຫະກຳ, ການເປີດເສັ້ນທາງລົດໄຟລາວ-ຈີນ ແລະ ທາງດ່ວນວຽງຈັນ-ວັງວຽງ ເຊິ່ງສາມາດກະຕຸ້ນການລົງທຶນ, ການທ່ອງ ທ່ຽວພາຍໃນປະເທດ, ນອກຈາກນັ້ນ ອັດຕາການຢາວັນຊິນມີແນວໂນ້ມເພີ່ມຂຶ້ນ ເຊິ່ງສາມາດສ້າງພູມຄຸ້ມກັນໝູ່. ເຖິງຢ່າງໃດກໍ່ຕາມ, ເສດຖະກິດມະຫາພາກຍັງບໍ່ມີຄວາມແນ່ນອນຫຼາຍດ້ານ, ເປັນຕົ້ນແມ່ນການລະບາດຂອງພະຍາດໂຄວິດ ທີ່ຍັງກະຈາຍໃນວົງກ້ວາງ, ອັດຕາແລກປ່ຽນມີການເໜັງຕີງ, ອັດຕາເງິນເຟີ້ ແລະ ລາຄານ້ຳມັນເພີ່ນຂຶ້ນ, ຄວາມຫຍໍ້ທໍ້ບາງທາງດ້ານງົບປະມານ, ຄັງສຳຮອງເງິນຕາຕ່າງປະເທດທີ່ມີໜ້ອຍ ແລະ ຄວາມຫຍຸ້ງຍາກໃນການຟື້ນຟູຂະແໜງການບໍລິການ ລວມເຖິງຂະແໜງການທ່ອງທ່ຽວ.

2. ແຜນດຳເນີນງານຂອງ ທຄຕລ ປະຈຳປີ 2022

ປີ 2022 ຍັງຈະເປັນອີກປີໜຶ່ງທີ່ການດຳເນີນທຸລະກິດຂອງ ທຄຕລ ສືບຕໍ່ພົບກັບຄວາມຫຍຸ້ງຍາກຫຼາຍປະການຈາກຜົນກະທົບໂດຍລວມຂອງເສດຖະກິດມະຫາພາກ, ຂໍ້ຂັດແຍ່ງລະຫວ່າງປະເທດມະຫາອຳນາດ ແລະ ການລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ຫຼາຍຂະແໜງການເສດຖະກິດໄດ້ຮັບຜົນກະທົບຢ່າງໜັກໜ່ວງ. ຈາກບັນຫາດັ່ງກ່າວນັ້ນຈະສົ່ງຜົນກະທົບຕໍ່ທຸລະກິດຂອງທະນາຄານ ເປັນຕົ້ນແມ່ນກະທົບຕໍ່ຄວາມສາມາດໃນການຊຳລະຕົ້ນທຶນ ແລະ ດອກເບ້ຍ ຂອງລູກຄ້າສິນເຊື່ອ ເຊິ່ງຈະເຮັດໃຫ້ຄວາມສາມາດສ້າງລາຍຮັບຂອງທະນາຄານຫຼຸດລົງ. ນອກຈາກນັ້ນ, ການຈັດກຸ່ມຄວາມສ່ຽງຂອງລູກຄ້າສິນເຊື່ອ ແລະ ວິທີແກ້ໄຂສຳລັບລູກຄ້າແຕ່ລະກຸ່ມ ເຫັນວ່າ ທຄຕລ ຍັງມີແນວໂນ້ມທີ່ຈະຕ້ອງໄດ້ອອກລາຍຈ່າຍຄ່າເສື່ອມສິນເຊື່ອ ແລະ ລາຍຈ່າຍເພື່ອລ້າງບັນຊີຄ້າງຮັບດອກເບ້ຍ ເພີ່ມຂຶ້ນ ເນື່ອງຈາກຈະມີການຫຼຸດເງດລູກຄ້າເປັນ NPL ໃນແຕ່ລະໄລຍະ. ແຕ່ເຖິງຢ່າງໃດກໍ່ຕາມຄຽງຄູ່ກັບສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດໃນປະຈຸບັນ ພາບລວມຂອງມະຫາພາກເຫັນວ່າຍັງມີໂອກາດທີ່ດີຂຶ້ນໃນປີ 2022 ເນື່ອງຈາກບັນດາໂຄງການໃຫຍ່ລະດັບຊາດໄດ້ເລີ່ມນຳໃຊ້ ເປັນຕົ້ນແມ່ນໂຄງການທາງລົດໄຟລາວ-ຈີນ ທີ່ເລີ່ມນຳໃຊ້ໃນທ້າຍປີ 2021 ຜ່ານມາ ເຊິ່ງຈະສ້າງໂອກາດທາງທຸລະກິດຫຼາຍຂຶ້ນໃຫ້ຫຼາຍຂະແໜງການເສດຖະກິດຂອງ ສປປ ລາວ. ນອກຈາກນັ້ນ, ຫຼາຍຂະແໜງການທຸລະກິດໄດ້ເລີ່ມກັບມາເຄື່ອນໄຫວປົກກະຕິ ຫຼັງຈາກມາດຕະການຕ່າງໆຂອງພາກລັດໄດ້ຮັບການຜ່ອນຜັນ. ຈາກປັດໄຈດ້ານຕ່າງໆທີ່ກ່າວມານັ້ນ ໃນປີ 2022 ທຄຕລ ຍັງຈະສືບຕໍ່ນຳນິດທິດທາງດຳເນີນທຸລະກິດໃຫ້ມີລັກສະນະສູ້ຊົນ ທັງນີ້ກໍ່ເພື່ອເຮັດໃຫ້ຜົນການດຳເນີນທຸລະກິດໂດຍລວມອອກມາມີປະສິດທິຜົນ, ສ້າງຄວາມເຊື່ອໝັ້ນ ແລະ ຜົນປະໂຫຍດສູງສຸດໃຫ້ແກ່ຜູ້ຖືຮຸ້ນ. ເຖິງແມ່ນວ່າການຂະຫຍາຍສິນເຊື່ອທີ່ເປັນການສ້າງລາຍຮັບຫຼັກໃຫ້ແກ່ທະນາຄານ ຈະມີຄວາມຫຍຸ້ງຍາກ, ແນວໂນ້ມຂອງລາຍຮັບຈາກດອກເບ້ຍເງິນກູ້ຈະຫຼຸດລົງ ແຕ່ ທຄຕລ ກໍ່ຈະສຸມໃສ່ວຽກງານການແກ້ໄຂໜີ້ເປັນຫຼັກ ເພື່ອສ້າງລາຍຮັບໃຫ້ແກ່ທະນາຄານ ແລະ ແກ້ໄຂບັນຫາໜີ້ສິນທີ່ສະສົມໃນໄລຍະຜ່ານມາ ໃຫ້ຫຼຸດລົງ ເຊິ່ງລາຍລະອຽດຂອງແຜນແຕ່ລະດ້ານມີດັ່ງນີ້:

2.1. ວິໄສທັດ ທຄຕລ

ແມ່ນໄດ້ກຳນົດວິໄສທັດລວມຂອງຕົນຕາມແຜນຍຸດທະສາດໄລຍະຍາວ ແຕ່ປີ 2021-2025 ຄື "**ເປັນ ທະນາຄານທີ່ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ**".

2.2 ພາລະກິດ

ເພື່ອເຮັດໃຫ້ ທຄຕລ ກາຍ ເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ໄດ້ມາດຖານສາກົນ ນັ້ນ ພາລະກິດຫຼັກ ທີ່ສຳຄັນຂອງ ທຄຕລ ທີ່ຈະຕ້ອງໄດ້ສຸມໃສ່ແມ່ນ ການພັດທະນາການປັບປຸງດ້ານບໍລິການໃຫ້ແທດເໝາະກັບໄລຍະ ການປ່ຽນໃໝ່, ສ້າງຄວາມເຂັ້ມແຂງໝັ້ນຄົງທາງດ້ານການເງິນ, ປະຕິບັດຕາມຫຼັກການບາເຊ2, ພັດທະນາລະບົບ ໄອທີ ແລະ ເທັກໂນໂລຊີທີ່ທັນສະໄໝ ເຂົ້າໃນລະບົບບໍລິການພັດທະນາດ້ານລະບົບຂໍ້ມູນຂ່າວສານໃຫ້ຖືກຕ້ອງ, ຊັດ ເຈນ ໂປ່ງໃສ, ວ່ອງໄວ ແລະ ຮັບປະກັນຄວາມປອດໄພໄດ້ມາດຖານສາກົນ. ພ້ອມນັ້ນ, ກໍ່ເນັ້ນໃສ່ການພັດທະນາບຸກ ຄະລາກອນໃນແຕ່ລະດ້ານໃຫ້ມີຄຸນນະພາບເພື່ອຮອງກັບການປ່ຽນແປງຂອງການພັດທະນາ ທຄຕລ ໃຫ້ມີຄວາມຊຳ ນິຊຳນານສະເພາະດ້ານເປັນມືອາຊີບດ້ານການບໍລິການທະນາຄານ, ສ້າງຄວາມເພິ່ງພໍໃຈໃຫ້ກັບລູກຄ້າທີ່ມາໃຊ້ບໍລິ ການ, ສ້າງປະສິດທິພາບທາງດ້ານການເງິນເພື່ອຜົນປະໂຫຍດສູງສຸດໃນແກ່ຜູ້ຖືຮຸ້ນ ທຄຕລ ແບບຍືນຍົງ.

2.3 ເປົ້າໝາຍການດຳເນີນງານ 2022

ເພື່ອເຮັດໃຫ້ການພັດທະນາຂອງ ທຄຕລ ສຳເລັດຕາມລະດັບຄາດໝາຍທີ່ວາງໄວ້ໃນທຸກໆດ້ານ ທຸກໆພາ ສ່ວນຕ້ອງໄດ້ເພີ່ມທະວີຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດແຜນດຳເນີນງານ, ແຜນໂຄງການ ຂອງ ທຄຕລ ໃຫ້ ບັນລຸເປົ້າໝາຍທີ່ວາງໄວ້ໃນແຕ່ໄລຍະ ຄື:

- ຮັບປະກັນການຂະຫຍາຍຕົວຂອງທຸລະກິດ ທຄຕລ ໃຫ້ມີຄວາມສະຖຽນ, ເຂັ້ມແຂງທາງດ້ານການເງິນ ແລະ ຍືນຍົງ ທັງນີ້ເພື່ອສາມາດຮັບມືກັບສະພາບການປ່ຽນແປງ ແລະ ຜົນກະທົບຕ່າງໆໃນອານາຄົດ;
- ການບໍລິການທີ່ມີຄວາມທັນສະໄໝ ແລະ ນຳໃຊ້ນະວັດຕະກຳໃໝ່ໃນທຸລະກິດທະນາຄານ ເພື່ອຫັນສູ່ຮູບ ແບບການບໍລິການທີ່ເປັນ Digital Banking ໃຫ້ຫຼາຍຂຶ້ນ;
- ພັດທະນາບຸກຄະລາກອນຮອບດ້ານໃຫ້ເປັນຊ່ຽວຊານ ແລະ ເປັນມືອາຊີບ;
- ຍຶດຖືລູກຄ້າເປັນໃຈກາງໃນການຮັກສາຖານລູກຄ້າເກົ່າ, ຂະຫຍາຍຖານລູກຄ້າໃໝ່ ແລະ ການສ້າງຄວາມເພິ່ງ ພໍໃຈ;
- ສ້າງຜົນປະໂຫຍດທີ່ຍືນຍົງໃຫ້ແກ່ຜູ້ຖືຮຸ້ນ ທຄຕລ ແລະ ປະກອບເປັນສ່ວນໜຶ່ງຂອງສັງຄົມ;

ເພື່ອເຮັດໃຫ້ທະນາຄານສາມາດປະຕິບັດໄດ້ເງື່ອນໄຂລະບຽບການ ຂອງບັນດາມາດຕະຖານຕ່າງໆຂອງສາກົນ.

3. ແຜນຖານະການເງິນທີ່ສຳຄັນປະຈຳປີ 2022:

ໃນປີ 2022 ທຄຕລ ຍັງຈະສືບຕໍ່ກຳນົດທິດທາງດຳເນີນທຸລະກິດຂອງຕົນເອງໃຫ້ມີລັກສະນະສູ້ຊົນ ຮັກສາຄຸນະພາບສິນເຊື່ອ ແລະ ເລັ່ງການແກ້ໄຂໜີ້, ທັງນີ້ກໍ່ເພື່ອເຮັດໃຫ້ຜົນການດຳເນີນທຸລະກິດໂດຍລວມອອກ ມາມີປະສິດທິຜົນ, ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ຖືຮຸ້ນ ເຊິ່ງລາຍລະອຽດມີດັ່ງນີ້:

- ຍອດຊັບສິນ : 72.543.000 ລ້ານກີບ, ທຽບໃສ່ການປະຕິບັດປີ 2021 ເພີ້ມຂຶ້ນ 6,31%;
- ຍອດເງິນຝາກ: 66.000.000 ລ້ານກີບ, ທຽບໃສ່ການປະຕິບັດປີ 2021 ເພີ້ມຂຶ້ນ 6,79%;
- ຍອດເງິນກູ້ທັງໝົດ: 31.737.000 ລ້ານກີບ, ທຽບໃສ່ການປະຕິບັດປີ 2021 ເພີ້ມຂຶ້ນ 5,51%;
- ໜີ້ NPL ທັງໝົດ : 1.847.000 ລ້ານກີບ ທຽບໃສ່ປະຕິບັດ 2021 ເພີ້ມຂຶ້ນ 59,05% ແລະ ກວມ 5,82% ຂອງສິນເຊື່ອທັງໝົດ;
- ກຳໄລກ່ອນອາກອນ: 59.000 ລ້ານກີບ ທຽບໃສ່ປະຕິບັດ 2021 ເພີ້ມຂຶ້ນ 368,81%.

2. ແຜນປະກອບອັດຖເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ

ການຂຶ້ນແຜນປະກອບອັດຖເຕັກນິກພາຍໃນປີ 2022 ແມ່ນຈະເນັ້ນໃສ່ສະເພາະວຽກງານທີ່ຈຳເປັນ, ປ່ຽນ ແທນເຄື່ອງເກົ່າທີ່ເປ່ເພບໍ່ສາມາດນຳໃຊ້ໄດ້ເທົ່ານັ້ນ, ສ່ວນເຄື່ອງທີ່ໝົດຫຼ້ຍຫ້ຽນແຕ່ສາມາດນຳໃຊ້ໄດ້ຢູ່ແມ່ນໃຫ້ສືບຕໍ່

ບຳລຸງຮັກສາ, ສ້ອມແປງ ແລະ ສືບຕໍ່ນຳໃຊ້. ການກຳນົດແຜນປະກອບອັດຕາເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ທີ່ຄາດຄະເນຈະຈັດເຂົ້າຊັບສົມບັດ ພາຍໃນປີ 2022 ທັງໝົດ ຈຳນວນ 231,96 ຕື້ກີບ ເຊິ່ງຢູ່ໃນຂອບເຂດຂອງແຫຼ່ງທຶນທີ່ມີ. ໃນນັ້ນ, ຫຼັກໆ 2022 ແມ່ນເນັ້ນໜັກໃສ່ສະເພາະວຽກງານທີ່ມີຄວາມຈຳເປັນ ເພື່ອເສີມສ້າງຄວາມໝັ້ນຄົງທາງດ້ານລະບົບໃຫ້ແກ່ ທຄຕລ.

ຫົວໜ່ວຍກີບ

ລ/ດ	ເນື້ອໃນ	ແຜນຄາດຄະເນເຂົ້າຊັບສົມບັດ 2022	
		ລາຍການ	ຈຳນວນເງິນ
	ລວມທັງໝົດ:	**4.691**	**231.966.515.000**
1	ໂປຼແກຼມ	28	13.356.600.000
2	ສິ່ງປຸກສ້າງ	8	135.919.742.000
3	ພາຫະນະ	28	3.053.000.000
4	ສິ່ງຕິດຕັ້ງຈັດວາງ	242	2.700.200.000
5	ເຄື່ອງຈັກຮັບໃຊ້ຫ້ອງການ	3.571	73.319.829.000
6	ເຄື່ອງຮັບໃຊ້ຫ້ອງການ	814	3.617.144.000

3. ແຜນຂະຫຍາຍໜ່ວຍບໍລິການ

ປີ 2022 ທຄຕລ ມີແຜນຈະຂະຫຍາຍຕ່າໜ່ວຍບໍລິການ ໃນຂົງເຂດທີ່ເປັນຈຸດສຸມໂດຍທີ່ມີການວິເຄາະໄລ່ລຽງສະພາບການຂະຫຍາຍຕົວຂອງເສດຖະກິດເວົ້າລວມ ເວົ້າສະເພາະແມ່ນຜົນການດຳເນີນງານຂອງ ທຄຕລ ຊຶ່ງຈະມີການສຳຫຼວດເຖິງຄວາມເປັນໄປໄດ້ຄວາມເໝາະສົມ ຮັບປະກັນຄຸນນະພາບຢູ່ແຕ່ລະຂົງເຂດໃນແຕ່ລະໄລຍະ ເພື່ອສ້າງຜົນຕອບແທນສູງສຸດໃຫ້ແກ່ ທຄຕລ. ສຳລັບແຜນການຂະຫຍາຍປີ 2022 ກຳນົດແຜນຂະຫຍາຍຕາໜ່ວຍບໍລິການໃໝ່ ຢູ່ 2 ແຫ່ງ ແລະ ຍົກຍ້າຍໜ່ວຍບໍລິການໄປຈຸດໃໝ່ 2 ແຫ່ງ ດັ່ງລາຍລະອຽດລຸ່ມນີ້:

ລ/ດ	ເນື້ອໃນ	ໝາຍເຫດ
ຂະຫຍາຍໃໝ່		
1	ໜ່ວຍບໍລິການສະຖານີລົດໄຟ	ຂະຫຍາຍໃໝ່
2	ໜ່ວຍບໍລິການໂພນພະເນົາ	ຂະຫຍາຍໃໝ່
ຍ້າຍສະຖານທີ່ໄປຈຸດໃໝ່		
1	ໜ່ວຍບໍລິການໜອງແຕ່ງ	ຍ້າຍຫ້ອງບໍລິການໂຍທາທິ່ງປ່ຽງອອກມາ
2	ໜ່ວຍບໍລິການເຂດເສດຖະກິດກວມລວມໄຊເສດຖາ	ຍ້າຍຈາກໜ່ວຍບໍລິການນ້ຳພຸ

4. ແຜນຮັບພະນັກງານໃໝ່

ສຳລັບປີ 2022 ທຄຕລ ໄດ້ຂຶ້ນແຜນສຳລັບຮັບພະນັກງານໃໝ່ໂດຍໄດ້ສັງລວມຄວາມຕ້ອງການພະນັກງານຈາກບັນດາພະແນກ, ສູນ, ສາຂາ ໃນທົ່ວລະບົບທີ່ມີຄວາມຈຳເປັນ. ສຳລັບການປະກອບພະນັກງານໃໝ່ແມ່ນຈະອີງໃສ່ສະພາບການທາງດ້ານເສດຖະກິດ ແລະ ການໄລ່ລຽງຜົນການດຳເນີນທຸລະກິດໃນແຕ່ລະໄລຍະເປັນຕົ້ນຕໍ ເປັນຕົ້ນແມ່ນເພື່ອຮອງຮັບວຽກງານສະເພາະດ້ານທີ່ຈຳເປັນ ບໍ່ສາມາດສັບຊ້ອນພະນັກງານພາຍໃນໄດ້. ຫຼັກໆພາຍໃນປີ 2022 ແມ່ນຈະເນັ້ນການສັບຊ້ອນ, ຈັດວາງ ພະນັກງານພາຍໃນໃຫ້ມີຄວາມເໝາະສົມ, ກະທັດຮັດ ແລະ ມີປະສິດທິຜົນ ເພື່ອຫຼຸດຜ່ອນລາຍຈ່າຍ. ຊຶ່ງແຜນການຮັບພະນັກງານໃໝ່ມີຈຳນວນທັງໝົດ **06** ຄົນ ເຊິ່ງເນັ້ນຮັບສະເພາະພະນັກງານຊ່ຽວຊານສະເພາະດ້ານເທົ່ານັ້ນ.

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບວັດທະນາຖາວອນ
----------===000===----------

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ສຳນັກງານໃຫຍ່

ບົດສະຫຼຸບຫຍໍ້
ການສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນ

I. ຄວາມຈຳເປັນ ແລະ ຄວາມສຳຄັນໃນການສ້າງຕັ້ງບໍລິສັດ

ຈຸດປະສົງໃນການສ້າງ **ບໍລິສັດ ທຄຕລ ບໍລິຫານຊັບສິນ** (BCEL ASSET MANAGEMENT) ແມ່ນ ເປັນໂອກາດໜຶ່ງໃນການສ້າງລາຍຮັບໃຫ້ ທະນາຄານ ທັງເປັນບໍລິສັດທຳອິດໃນ ສປປ ລາວ ທີ່ດຳເນີນທຸລະກິດດັ່ງກ່າວ, ເປົ້າຫມາຍໃນການດຳເນີນທຸລະກິດແມ່ນເພື່ອບໍລິຫານຈັດການຊັບສິນ ຫຼື ໜີ້ທີ່ຊື້ຫລຸດຈາກທະນາຄານ/ສະຖາບັນການເງິນ ເພື່ອນຳມາປັບປຸງ-ພັດທະນາໃຫ້ສາມາດສ້າງລາຍຮັບ ຫລື ກາຍເປັນຊັບສິນທີ່ໄດ້ມາດຕະຖານ ແລະ ເປັນທີ່ຕ້ອງການຂອງຕະຫລາດຫລາຍຂຶ້ນ.

ນອກຈາກນັ້ນ, ບໍລິສັດ ທຄຕລ ບໍລິຫານຊັບສິນ ຍັງຈະເຂົ້າໄປຊ່ວຍບັນດາທຸລະກິດເປົ້າໝາຍໃນການຟື້ນຟູທຸລະກິດ, ປັບປຸງໂຄງສ້າງໜີ້ໃຫ້ສາມາດກັບມາດຳເນີນທຸລະກິດໄດ້ ໂດຍຫຼາຍຮູບການ ແລະ ຫຼາຍຮູບແບບ ຕາມຂະບວນການ ແລະ ຂັ້ນຕອນຂອງບໍລິສັດ.

ພ້ອມດຽວກັນນີ້, ພວກເຮົາຍັງມີວິໄສທັດທີ່ຊ່ວຍແກ້ໄຂໜີ້ສິນໃນລະບົບ ຫຼື ຊັບສິນລໍຖ້າຂາຍຈາກທະນາຄານ/ສະຖາບັນການເງິນຕ່າງໆ ເພື່ອຊ່ວຍເພີ່ມຄຸນນະພາບໃຫ້ຊັບສິນດ້ອຍຄຸນນະພາບ ໃຫ້ກັບມາເປັນຊັບສິນທີ່ມີຄຸນນະພາບ ແລະ ກັບມາໝຸນວຽນໃນລະບົບເສດຖະກິດ ລວມທັງເພີ່ມມູນຄ່າໃຫ້ຫຼາຍຂຶ້ນກວ່າເກົ່າ.

II. ຂໍ້ມູນກ່ຽວກັບບໍລິສັດທີ່ຂໍສ້າງຕັ້ງ

1. ຊື່ບໍລິສັດ:

   1.1 ບໍລິສັດ ທຄຕລ ບໍລິຫານຊັບສິນ

   1.2 ທີ່ຕັ້ງ: ຕຶກ ໂຮງແຮມລັດສະໝີ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ.


2. ປະເພດທຸລະກິດ (ໃບອະນຸຍາດດຳເນີນທຸລະກິດ):

   1). ຮັບຊື້ໜີ້ ຫຼື ຮັບໂອນ ໜີ້ ແລະ ຊັບສິນລໍການຂາຍ ຈາກ ສະຖາບັນການເງິນ/ທະນາຄານທຸລະກິດ (ໃນເບື້ອງຕົ້ນຈະຮັບສະເພາະກຸ່ມເປົ້າໝາຍກ່ອນ) ແລະ ດຳເນີນທຸລະກິດກ່ຽວກັບການບໍລິຫານຈັດການໜີ້ສະເພາະ ເປັນຕົ້ນ: ການເຊົ່າສິນເຊື່ອ, ທຸລະກິດດ້ານການລົງທຶນ/ຖືຮຸ້ນ ແລະ ການປັບປຸງ-ພັດທະນາຊັບສິນ ຫຼື ຫຼັກຊັບຄ້ຳປະກັນ ໃຫ້ສາມາດຈຳໜ່າຍສູ່ທ້ອງຕະຫຼາດ ຫຼື ສ້າງລາຍຮັບໃຫ້ແກ່ຜູ້ຖືຮຸ້ນ. ຕົວຢ່າງ: ຊັບສິນປະເພດ ຕຶກພານິດ, ອາຄານ, ໂຮງແຮມ, ເຮືອນຢູ່ອາໄສ ແລະ ອື່ນໆ ;

   2) ທຸລະກິດໃຫ້ບໍລິການເຈລະຈາ, ຕິດຕາມທວງຖາມ ແລະ ເກັບໜີ້ທວງຍາກ (ໃນເບື້ອງຕົ້ນຈະຮັບສະເພາະກຸ່ມເປົ້າໝາຍ ກ່ອນ, ໃນອະນາຄົດ ຈະຂະຫຍາຍສະຖາບັນການເງິນ/ທະນາຄານທຸລະກິດອື່ນໆ);

III. ໂຄງປະກອບການຈັດຕັ້ງຂອງບໍລິສັດ

1) ແຜນວາດການຈັດຕັ້ງ:



IV. ການວິເຄາະຕາມຫຼັກການ SWOT

- ໂອກາດ (Opportunities)
  - ສະພາບເສດຖະກິດມີແນວໂນ້ມດີຂຶ້ນ ເມື່ອທຽບກັບປີຜ່ານມາ;
  - ທາງລົດໄຟຟ້າໄດ້ເປີດໃຊ້ບໍລິການປົກກະຕິ;
  - ທາງດ່ວນໄດ້ເປີດໃຊ້ບໍລິການປົກກະຕິ;
  - ຊັບສິນລໍຖ້າຂາຍໃນລະບົບທະນາຄານມີຫຼາຍ, ສະນັ້ນເປັນໂອກາດໜຶ່ງໃນການຊື້ຫຼຸດ ແລະ ຂາຍໃນລາຄາທີ່ສູງເພື່ອສ້າງລາຍຮັບ ສູ່ ທຄຕລ;
  - ເປັນໜຶ່ງໃນບໍລິສັດທຳອິດທີ່ເຮັດທຸລະກິດດັ່ງກ່າວ ເຮັດໃຫ້ມີໂອກາດໃນການຂະຫຍາຍຕົວສູງ.
- ອຸປະສັກ (Threats)
  - ຖ້າຫາກສະພາບເສດຖະກິດສະລໍຕົວ, ສະພາບການລະບາດພະຍາດໂຄວິດ-19, ອັດຕາເງິນເຟີ້ (ລາຄານ້ຳມັນ), ອັດຕາແລກປ່ຽນເໜັງຕີງ ແລະ ບັນຫາອື່ນໆຍັງສືບຕໍ່ໄລຍະຍາວ ແມ່ນສິ່ງຜົນກະທົບຕໍ່ການແກ້ໄຂໜີ້ ແລະ ການຂາຍອະສັງຫາລິມະຊັບ;
  - ຂະບວນການໃນການດຳເນີນຄະດີ ແລະ ການແກ້ໄຂໜີ້ ອາດໃຊ້ເວລາພໍສົມຄວນ;

- ຈຸດແຂງ (Strengths)
  - ມີບຸກຄະລາກອນ ທີ່ມີຄວາມຮູ້ດ້ານທຸລະກິດມາເປັນຜູ້ບໍລິຫານ (ຄາດວ່າຈະຈ້າງຜູ້ຊ່ຽວຊານ ແລະ ມີ ປະສົບການພາຍນອກມາຊ່ວຍ);
  - ປະຊາຊົນ/ນັກທຸລະກິດໃດ ສົນໃຈຊື້ອະສັງຫາລິມະຊັບ ກໍ່ສາມາດເຂົ້າຫາແຫຼ່ງທຶນ ທຄຕລ ຕາມ ລະບຽບການກ່ຽວຂ້ອງ ຫຼື ຈ່າຍຜ່ອນຜ່ານ ບໍລິສັດ;
  - ມີ ລະບົບການຄຸ້ມຄອງບໍລິຫານທາງດ້ານເຕັກໂນໂລຊີໃຫ້ ທັນສະໄໝ;
- ຈຸດອ່ອນ (Weaknesses)
  - ອາດໃຊ້ເວລາດົນໃນການຂາຍຫຼັກຊັບ ໂດຍສະເພາະຊັບສິນທີ່ມີມູນຄ່າສູງ ແລະ ໃນສະພາບ ເສດຖະກິດສະລໍຕົວ.
  - ໃຊ້ເວລາໃນການແກ້ໄຂຄະດີ (ກໍລະນີມີຂໍ້ຄັດແຍ້ງກັບລູກຄ້າ);

V. ສະຫຼຸບ:

ຈາກການຄົ້ນຄວ້າ ແລະ ວິເຄາະຂ້າງເທິງ ສາມາດສະຫຼຸບໃຫ້ເຫັນໂອກາດຫນຶ່ງໃນການສ້າງລາຍຮັບໃຫ້ ທະນາຄານ ທັງເປັນບໍລິສັດທຳອິດໃນ ສປປ ລາວ ທີ່ດຳເນີນທຸລະກິດດັ່ງກ່າວ, ເປົ້າຫມາຍໃນການດຳເນີນທຸລະ ກິດແມ່ນເພື່ອບໍລິຫານຈັດການຊັບສິນ ຫຼື ໜີ້ທີ່ຊື້ຫລຸດຈາກ ທະນາຄານ/ສະຖາບັນການເງິນ ເພື່ອນຳມາປັບປຸງ-ພັດທະນາໃຫ້ສາມາດສ້າງລາຍຮັບ ຫລື ກາຍເປັນຊັບສິນທີ່ໄດ້ມາດຕະຖານ ແລະ ເປັນທີ່ຕ້ອງການຂອງ ຕະຫລາດຫລາຍຂຶ້ນ.

ໃບມອບສິດ
Proxy

1. ຂ້າພະເຈົ້າ ..... ສັນຊາດ.....
I / We ..... nationality .....
ເຮືອນເລກທີ່ ..... ບ້ານ ..... ເມືອງ ....
residing at ..... Village ..... District ....
ແຂວງ .....Province.....
ເປັນຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
Being a shareholder of Banque Pour Le Commerce Exterieur Lao Public
ມີຮຸ້ນທີ່ຖືຈຳນວນ.....ຮຸ້ນຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງ
Holding a total number of .....shares which are equivalent to the same number of votes

2. ຂໍມອບໝາຍສະມາຊິກສະພາບໍລິຫານອິດສະຫຼະລຸ່ມນີ້ (ກະລຸນາເລືອກ 1 ທ່ານ):
Hereby assign the Independent BOD member below (please select one only):

☐ ທ່ານ ທອງເພັດ ຈັນທະນິວົງ
Mr. Thongpheth Chanthanivong

☐ ທ່ານ ສອນໄຊ ສິລາເພັດ
Mr. Sonexay Silaphet

(ຫຼືບຸກຄົນອື່ນ ກະລຸນາລະບຸລາຍລະອຽດ / Or other person, please specify)

ຂໍມອບໝາຍ ທ່ານ/ທ່ານ ນາງ ..... ອາຍຸ.....ປີ
Hereby assign Mr./Ms. ..... age .....
ສັນຊາດ.....ຢູ່ເຮືອນເລກທີ່.....
Nationality…….. residing at.……
ບ້ານ..... ເມືອງ ..... ແຂວງ ....
Village ..... District ..... Province..... .....

ໃຫ້ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມ ແລະ ລົງຄະແນນສຽງແທນຂ້າພະເຈົ້າຢູ່ໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ທີ່ຈະຈັດຂຶ້ນໃນ ເວລາ 14:00 ໂມງ ຂອງວັນທີ 29 ເມສາ 2022.
To be my/our proxy to attend and vote on my/our behalf in the Annual General Shareholders' Meeting for year 2021 of the Banque Pour Le Commerce Exterieur Lao Public which will be held at 14:00 PM of 29 April 2022.

3. ຂ້າພະເຈົ້າ ອະນຸຍາດໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມດັ່ງນີ້ (ເລືອກເອົາໜຶ່ງ ຈາກສອງທາງເລືອກລຸ່ມນີ້)
I /We authorize the proxy to vote on my/our behalf in the Meeting as follows (**choose one from the two following options**):

1. ☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວເຫັນສົມຄວນ; ຫຼື
   To grant the proxy to consider and vote in all agendas on my/our behalf as the proxy may deem appropriate; ***or***

2. ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້, ກະລຸນາເລືອກລົງຄະແນນ **ເຫັນດີ ຫຼື ບໍ່ເຫັນດີ** ໃນທຸກໆວາລະລຸ່ມນີ້):
   To grant the proxy to vote as per my/our intention indicated in the followings (If you select this option, please choose to vote either ***approve*** or ***disapprove*** in every agenda):

ວາລະທີ 1: ພິຈາລະນາ ແລະ ຮັບຮອງ ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນປະຈຳປີ 2021 (ເອກະສານຄັດຕິດ 2)

Agenda 1: To consider and approve the Minutes of BCEL's Extraordinary Shareholders Meeting 2021 (Attachment 2)

☐ *ເຫັນດີ / approve* ☐ *ບໍ່ເຫັນດີ / disapprove*

ວາລະທີ 2: ພິຈາລະນາ ແລະ ຮັບຮອງ ບົດລາຍງານການດຳເນີນທຸລະກິດ ຂອງ ທຄຕລ ປະຈຳປີ 2021 ໂດຍສັງເຂບ (ເອກະສານຄັດຕິດ 3)

Agenda 2: To consider and approve the report of BCEL's Business Performance for 2021 in brief (Attachment 3)

☐ *ເຫັນດີ / approve* ☐ *ບໍ່ເຫັນດີ / disapprove*

ວາລະທີ 3: ພິຈາລະນາ ແລະ ຮັບຮອງແຜນການປີ 2022 (ເອກະສານຄັດຕິດ 4)

Agenda 3: To consider and approve the plan for the year 2022 (Attachment 4)

☐ *ເຫັນດີ / approve* ☐ *ບໍ່ເຫັນດີ / disapprove*

ວາລະທີ 4: ພິຈາລະນາ ແລະ ຮັບຮອງ ການສະເໜີສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນ (ເອກະສານຄັດຕິດ 5)

Agenda 4: To consider and approve the proposal to establish BCEL Asset management Company (Attachment 5)

☐ *ເຫັນດີ / approve* ☐ *ບໍ່ເຫັນດີ / disapprove*

ວາລະທີ 5: ພິຈາລະນາ ແລະ ຮັບຮອງ ເອົາເອົາການແຕ່ງຕັ້ງຜູ້ກວດສອບອິດສະຫຼະປະຈຳປີ 2022

Agenda 5: To consider and approve the appointment of independent auditor for the year 2022

☐ *ເຫັນດີ / approve* ☐ *ບໍ່ເຫັນດີ / disapprove*

4. ການລົງຄະແນນສຽງຂອງຜູ້ຕາງໜ້າທີ່ບໍ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນຂອງຂ້າພະເຈົ້າ.

Any votes made by the proxy contradicting to this Proxy shall be considered as invalid and shall not constitute my/our votes as the shareholder.

5. ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການຂອງຕົນໃນການລົງຄະແນນສຽງໃນວາລະໃດໜຶ່ງ ຫຼື ລະບຸໃວ້ ບໍ່ຈະແຈ້ງ ໃຫ້ຖືວ່າຂ້າພະເຈົ້າ ລົງຄະແນນສຽງເຫັນດີ

In case I/we have failed to specify my/our voting intention in any agenda or not clearly specified, my/our vote in such agenda shall be deemed approved.

6. ທຸກການກະທຳໃດຂອງຜູ້ຕາງໜ້າໃນກອງປະຊຸມ ທີ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າຂ້າພະເຈົ້າ ໄດ້ກະທຳເອງທຸກປະການ.

Any action made by the proxy in the meeting in accordance with this Proxy, shall be deemed as having been performed by myself/ourselves in all respects.

ທີ່..... ວັນທີ...../...../2022.

Wrote at…….. date…….

ເຊັນຜູ້ຖືຮຸ້ນທີ່ມອບໝາຍ / signed by the shareholder

ເຊັນຜູ້ຕາງໜ້າ /signed by the proxy

ໝາຍເຫດ/Remark:

1. ຜູ້ຖືຮຸ້ນ ຈະຕ້ອງແຕ່ງຕັ້ງຜູ້ຕາງໜ້າພຽງຜູ້ດຽວເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນຕົນເອງ
   The shareholder is required to assign only one proxy to attend and vote in the meeting on the shareholder's behalf.
2. ໃບມອບສິດສະບັບນີ້ຈະຕ້ອງນຳໄປຈົດທະບຽນສານ ນຳສຳນັກງານທະບຽນສານທີ່ຢູ່ສະດວກສຳລັບທ່ານ ເພື່ອໃຫ້ຮັບປະກັນຜົນ ສັກສິດທາງກົດໝາຍ, ທະນາຄານມີສິດປະຕິເສດໃບມອບສິດໃດໆທີ່ບໍ່ໄດ້ຈົດທະບຽນສານ.
   This Proxy must be certified by your most convenient Court Notary Office to ensure its legal validity. BCEL may reject any Proxies or proxy authorizations without endorsement of the Court Notary Office.
3. ຜູ້ຕາງໜ້າ ຕ້ອງສະແດງເອກະສານຂອງຕົນເອງຕໍ່ ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ) ພ້ອມກັບສຳເນົາເອະສານປະເພດດຽວກັນນີ້ຂອງຜູ້ຖືຮຸ້ນ, ໃບມອບສິດສະບັບນີ້ ແລະ ໜັງສືເຊີນປະຊຸມ.
   The proxy must present to the officers at registration desk his/her valid ID Card, or family book or passport (in case of foreign investor) together with the copies of the same documents of the shareholder, this Proxy, and the Invitation to the Meeting.



ທ່ານ ສອນໄຊ ສີລາເພັດ
ຮອງປະທານ

ຊີວະປະຫວັດຫຍໍ້

ວັນ, ເດືອນ, ປີເກີດ : 01/01/1977
ສັນຊາດ : ລາວ
ພາສາ : ອັງກິດ
ຕຳແໜ່ງ : ຮອງປະທານ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ

ປະຫວັດການສຶກສາ:

2017–2021: ສຶກສາ ແລະ ຄົ້ນຄວ້າປະລິນຍາເອກ ດ້ານການບັນຊີ (PhD Candidate) ຢູ່ມະຫາວິທະຍາໄລສີປະທຸມ, ປະເທດໄທ;
2013–2014: ສຶກສາ ແລະ ຄົ້ນຄວ້າປະລິນຍາໂທ ດ້ານການເງິນ ຢູ່ວິທະຍາໄລເທັກໂນໂລຢີສັນຕະພົນ ປະເທດໄທ;
1995–2000: ສຶກສາລະດັບປະລິນຍາຕີ ດ້ານບໍລິຫານທຸລະກິດ ວິທະຍາໄລຄອມເຊັນຕີ;
1995–1998: ສຶກສາລະດັບຊັ້ນສູງ ດ້ານການບັນຊີ ຢູ່ວິທະຍາໄລປາກປ່າສັກ;
06/2016: ເປັນສະມາຊິກຂອງ CPA ອົດສະຕາລີ;
2018: ເປັນສະມາຊິກຂອງ CPA ລາວ;
1999–2000: ເປັນສະມາຊິກຂອງ Lao Institute of Chartered Public Accountants (LICPA).

ປະຫວັດການເຮັດວຽກ:

2015–ປັດຈຸບັນ	:	ເປັນຮອງປະທານ Lao Chamber of Professional Accountants and Auditor (LCPAA)
01/2016–12/2017	:	ເປັນປະທານ ASEAN Federation of Accountants (AFA)
01/2014–12/2015	:	ຮອງເປັນປະທານ ASEAN Federation of Accountants (AFA)
07/2011–09/2014	:	ເປັນຜູ້ອຳນວຍການ Ernst & Young Lao Limited
07/2008–06/2011	:	ເປັນຜູ້ຈັດການອາວຸໂສຝ່າຍກວດສອບ Ernst & Young Lao Limited
08/2007–06/2008	:	ເປັນຜູ້ຈັດການຝ່າຍກວດສອບ Ernst & Young Lao Limited
05/2004–08/2007	:	ເປັນຜູ້ຈັດການຝ່າຍກວດສອບ PricewaterhouseCoopers (Lao) Ltd
2002–05/2004	:	ເປັນພະນັກງານກວດສອບອາວຸໂສປະສົບການ PricewaterhouseCoopers (Lao) Ltd
2000–2001	:	ເປັນພະນັກງານກວດສອບອາວຸໂສ PricewaterhouseCoopers (Lao) Ltd
1998–1999	:	ເປັນພະນັກງານຜູ້ຊ່ວຍກວດສອບ PricewaterhouseCoopers (Lao) Lt



ທ່ານ ທອງເພັດ ຈັນທະນິວົງ
ຮອງຄະນະບໍດີ

ຊີວະປະຫວັດຫຍໍ້
ວັນ, ເດືອນ, ປີເກີດ : 20/04/1962
ສັນຊາດ : ລາວ
ພາສາ : ອັງກິດ
ຕຳແໜ່ງ : ຮອງຄະນະບໍດີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ

ປະຫວັດການສຶກສາ:

2018–2021: ຄົ້ນຄວ້າປະລິນຍາເອກ ດ້ານການບັນຊີ (PhD Candidate, 2021) ຢູ່ມະຫາວິທະຍາໄລສີປະທຸມ ປະເທດໄທ;
2019: ໄດ້ຮັບປະກາດສະນິຍະບັດ ນັກຊ່ຽວຊານບັນຊີລາວ;
1998–2002: ຄົ້ນຄວ້າປະລິນຍາໂທ ດ້ານການພົວພັນສາກົນ ຢູ່ມະຫາວິທະຍາໄລ De Mons ປະເທດແບນຊິກ;
1998–2000: ຄົ້ນຄວ້າປະລິນຍາໂທ ດ້ານບໍລິຫານທຸລະກິດ ຢູ່ມະຫາວິທະຍາໄລເທັກໂນໂລຢີແຫ່ງເອເຊັຍ (AIT) ປະເທດໄທ;
1996–1997 ສຶກສາລະດັບປະລິນຍາຕີ ດ້ານບໍລິຫານທຸລະກິດ ໂຄງການຮ່ວມມືສະຖາບັນການເມືອງການປົກຄອງ ແຫ່ງຊາດ ແລະ ມະຫາວິທະຍາໄລເທັກໂນໂລຢີແຫ່ງເອເຊັຍ (AIT) ປະເທດໄທ;
1981–1985: ສຶກສາລະດັບປະລິນຍາຕີ ດ້ານຄະນິດສາດ-ຟີຊິກສາດ ຢູ່ມະຫາວິທະຍາໄລແຫ່ງຊາດ.

ປະຫວັດການເຮັດວຽກ:

- ເປັນຮອງຄະນະບໍດີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ (ຮັບຜິດຊອບຫຼັກສູດປະລິນຍາໂທ ແລະ ປະລິນຍາເອກ), ມະຫາວິທະຍາໄລແຫ່ງຊາດ
- ເປັນຮອງສາດສະດາຈານ ສາຂາບໍລິຫານທຸລະກິດ (ເລກທີ 304-178/ນຍ ລົງວັນທີ 04/09/2006)
- ເປັນປະທານຄະນະກຳມະທິການຫຼັກສູດ ການບັນຊີ ແລະ ການກວດສອບ (CPA) ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ
- ເປັນຄະນະບໍລິຫານງານສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ
- ເປັນກຳມະການອິດສະຫຼະຂອງສະພາບໍລິຫານ ລັດວິສາຫະກິດ ລາວໂທລະຄົມ
- ເປັນຄະນະຄົ້ນຄວ້າ ແລະ ປັບປຸງລະບົບບັນຊີວິສາຫະກິດ, ຮູບແບບເອກະສານການລາຍງານການເງິນ, ການກຳນົດ ຜັງບັນຊີ ແລະ ເທັກນິກການບັນທຶກບັນຊີວິສາຫະກິດ
- ເປັນອາຈານສອນຫຼັກສູດ ປະລິນຍາຕີ ແລະ ປະລິນຍາໂທ ສາຂາບໍລິຫານທຸລະກິດ, ການບັນຊີ, ການເງິນ ແລະ ການທະນາຄານ, ເສດຖະສາດ ຂອງ ມະຫາວິທະຍາໄລ ແຫ່ງຊາດ
- ເປັນອາຈານຮັບເຊີນຫຼັກສູດ MBA ມະຫາວິທະຍາໄລຂອນແກນ, ປະເທດໄທ
- ເປັນຄູຝຶກ ມາດຕະຖານການບັນທຶກບັນຊີສາກົນ (IFRS) ແລະ ມາດຖານການກວດສອບ (AIS)

ລະບຽບສຳລັບການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ
Rules for the Annual General Shareholders' Meeting of BCEL

1. ການລົງທະບຽນເພື່ອເຂົ້າຮ່ວມກອງປະຊຸມ/**Registration for attending the meeting**

ຜູ້ເຂົ້າຮ່ວມກອງປະຊຸມທຸກຄົນ ຕ້ອງລົງທະບຽນໃຫ້ຮຽບຮ້ອຍຕາມຂັ້ນຕອນທີ່ ທຄຕລ ກຳນົດໄວ້ ກ່ອນເຂົ້າຮ່ວມກອງປະຊຸມ ແລະ ຕ້ອງອະນຸຍາດໃຫ້ ທຄຕລ ສຳເນົາເອົາບັດປະຈຳຕົວ ຫຼື ໜັງສືຜ່ານແດນ ຫຼື ເອກະສານອື່ນໆທີ່ສາມາດໃຊ້ແທນໄດ້ ເພື່ອເອົາໄວ້ເປັນຫຼັກຖານ.

All attendees must complete registration in accordance with the procedures specified by BCEL before attending the meeting and allow BCEL to photocopy their ID cards or passports or other similar documents as evidence.

ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ ຕ້ອງນຳເອົາໜັງສືແຈ້ງສິດເຂົ້າຮ່ວມກອງປະຊຸມທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ (ທີ່ມີເຄື່ອງໝາຍບາໂຄດ) ມາແຈ້ງພ້ອມໃນເວລາລົງທະບຽນ. ກໍລະນີທີ່ບໍ່ມີໃບແຈ້ງສິດເຂົ້າຮ່ວມກອງປະຊຸມແລ້ວນັ້ນ ຈະຖືວ່າການລົງທະບຽນບໍ່ສຳເລັດ ແລະ ຈະສົ່ງຜົນໃຫ້ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ບໍ່ມີສິດລົງຄະແນນສຽງ, ຕັ້ງຄຳຖາມ ຫຼື ມີຄຳເຫັນຕໍ່ທີ່ປະຊຸມ.

Shareholders or proxies must bring and present to the registration desk the Invitation issued by the Lao Securities Exchange (containing bar code). In absence of such Invitation, the registration shall be deemed incomplete and shall lead such shareholders or proxies to have no right to vote, question or make comments in the meeting.

ຜູ້ຕາງໜ້າ ຕ້ອງສະແດງເອກະສານຂອງຕົນເອງຕໍ່ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ) ພ້ອມກັບ ສຳເນົາເອກະສານປະເພດດຽວກັນນີ້ຂອງຜູ້ຖືຮຸ້ນ, ໃບມອບສິດ ແລະ ໜັງສືເຊີນປະຊຸມ. ຖ້າເອກະສານເຫຼົ່ານີ້ເປັນພາສາຕ່າງປະເທດ ແມ່ນອະນຸຍາດໄດ້ສະເພາະເອກະສານທີ່ເປັນພາສາ ອັງກິດເທົ່ານັ້ນ.

The proxy must present to the officers at registration desk his/her valid ID Card, or family book or passport (in case of foreign investor) together with the copies of the same documents of the shareholder, letter of Proxy, and the Invitation to the Meeting. If these documents are in foreign languages, only the documents in English are acceptable.

2. ອົງປະຊຸມ/**Quorum**

ກອງປະຊຸມສາມາດດຳເນີນໄດ້ກໍ່ຕໍ່ເມື່ອມີຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ເຂົ້າຮ່ວມກອງປະຊຸມຢ່າງໜ້ອຍ 2 ຄົນຂຶ້ນໄປ ແລະມີຈຳນວນຮຸ້ນທີ່ຖືເກີນ 51% ຂອງຈຳນວນຮຸ້ນສາມັນທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນ ກົດລະບຽບຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

Shareholders' meeting can commence only if there are at least **2** or more shareholders attending the meeting and their shares shall be more than **51%** of the total shares, pursuant to the Articles of Association of Banque pour le Commerce Exterieur Lao Public.

3. ການດຳເນີນກອງປະຊຸມ/**Rules for proceeding**

3.1 ທ່ານປະທານສະພາບໍລິຫານ ທຄຕລ ເປັນປະທານກ່າວເປີດ ແລະ ນຳພາດຳເນີນກອງປະຊຸມ.

The Chairman of BCEL's Board of Directors will preside over and lead the meeting.

3.2 ທ່ານ ປະທານສະພາບໍລິຫານ ເປັນຜູ້ສະເໜີຫົວຂໍ້ຂອງແຕ່ລະວາລະ ແລະ ເປັນຜູ້ສັ່ງໂຫວດຄະແນນແຕ່ລະວາລະ.

The Chairman will propose the title of each agenda and order the voting of each agenda.

3.3 ຜູ້ອຳນວຍການໃຫຍ່ ທຄຕລ ເປັນຜູ້ດຳເນີນສະເໜີ ເນື້ອໃນຂອງແຕ່ ລະວາລະໃນກອງປະຊຸມ.

The General Managing Director of BCEL will present details of each agenda to the meeting.

3.4 ຫຼັງຈາກທີ່ທ່ານຜູ້ອຳນວຍການ ໄດ້ສະເໜີເນື້ອໃນຂອງວາລະແລ້ວ, ປະທານກອງປະຊຸມຈະສະເໜີໃຫ້ຜູ້ຖືຮຸ້ນຫຼືຜູ້ຕາງ ໜ້າທີ່ມີຄຳຖາມ ຫຼື ຄຳເຫັນຕໍ່ວາລະທີ່ກຳລັງຖືກພິຈາລະນາຢູ່. ກໍລະນີມີຄຳຖາມ ທ່ານຜູ້ອຳນວຍການໃຫຍ່ຈະເປັນຜູ້ໃຫ້ຄຳອະທິບາຍຊີ້ແຈງ. ຈາກນັ້ນ, ຖ້າບໍ່ມີຄຳຖາມໃດໆຕໍ່ແລ້ວ ປະທານກອງປະຊຸມຈະສະເໜີໃຫ້ຜູ້ຖືຮຸ້ນຫຼືຜູ້ຕາງໜ້າລົງມະຕິຕໍ່ວາລະດັ່ງກ່າວ.

After the General Managing Director has presented details of each agenda, the Chairman will ask the Shareholders and Proxies to make necessary comments or questions. Should there is a question, the General Managing Director shall give the answer forthwith. Only when there is no any further question or comment, the Chairman shall ask the Shareholders and Proxies to vote on the agenda

3.5 ຜູ້ເຂົ້າຮ່ວມກອງປະຊຸມ ຕ້ອງປິດສຽງໂທລະສັບ ຫຼື ອຸປະກອນການສື່ສານທຸກຢ່າງ ແລະ ບໍ່ສົ່ງສຽງດັງລົບກວນ ຕະຫຼອດໄລຍະຂອງການດຳເນີນກອງປະຊຸມ.

All attendees must switch off the sound of their mobile phones or any communication devices and must not make any disturbing noise throughout the meeting.

4. ພາສາທີ່ນຳໃຊ້ໃນກອງປະຊຸມ/**Language in the meeting**

ພາສາທີ່ນຳໃຊ້ຢູ່ໃນກອງປະຊຸມແມ່ນພາສາລາວ

The language used in the meeting is Lao language.

5. ຜູ້ມີສິດລົງຄະແນນສຽງ/**Persons eligible to vote**

5.1 ມີແຕ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງຖືກຕ້ອງ ຊຶ່ງໄດ້ລົງທະບຽນເຂົ້າຮ່ວມກອງປະຊຸມຮຽບຮ້ອຍແລ້ວ ເທົ່ານັ້ນ ທີ່ຈະມີສິດລົງຄະແນນສຽງ.

Only the shareholders or proxies who have registered to attend the meeting are eligible to vote.

5.2 ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ບໍ່ໄດ້ລົງທະບຽນເຂົ້າຮ່ວມກອງປະຊຸມ ແລະ ຜູ້ເຂົ້າຮ່ວມອື່ນ ຈະບໍ່ມີ ສິດໃນການລົງຄະແນນສຽງ.

Any shareholders or proxies who have not registered to attend the meeting and other attendees will not be eligible to vote.

6. ການລົງຄະແນນສຽງ/**Voting**

ປະທານກອງປະຊຸມ ຈະເປັນຜູ້ສະເໜີວາລະທີ່ຕ້ອງການໃຫ້ລົງຄະແນນສຽງ ໂດຍຈະເຊີນ ພຽງແຕ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ ທ່ານໃດທີ່ບໍ່ເຫັນດີຕໍ່ບັນຫາທີ່ກອງປະຊຸມໄດ້ນຳ ສະເໜີເທົ່ານັ້ນ ລົງຄະແນນສຽງ ເພື່ອຄວາມສະດວກໃນການນັບຄະແນນສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ເຫັນດີຕໍ່ການສະເໜີດັ່ງກ່າວ ກໍບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).

The Chairman of the meeting will propose the agendas that require voting, and only the shareholders or proxies who DO NOT AGREE with the matters proposed by the meeting are invited to vote so as to facilitate vote counting process (meaning that for those who agree with such matters are not necessary to cast a vote).

7. ຜົນສັກສິດຂອງການລົງຄະແນນສຽງ/**Effectiveness of voting**

7.1 ສຳລັບ ການລົງມະຕິທົ່ວໄປ, ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງ ຫລາຍກວ່າເຄິ່ງໜຶ່ງຂອງ ຈຳນວນຮຸ້ນ ທຄຕລ ທັງໝົດໃນທີ່ປະຊຸມ.

For ordinary resolutions, the "Disapprove votes" will become effective only if such votes account for more than half of the total number of BCEL shares attending the meeting

7.2 ສຳລັບການລົງມະຕິສະເພາະ, ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງ ຫລາຍກວ່າ ໜຶ່ງສ່ວນສາມຂອງຈຳນວນຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຫຼາຍກວ່າ 20% ຈຳນວນຮຸ້ນ ທຄຕລ ທັງໝົດ.

For special resolution, the "Disapprove votes" will become effective only if such votes account for more than one third of total shareholders or proxies attending the meeting and having shares more than **20%** of the total BCEL shares.

7.3 ທຸກບັດລົງຄະແນນສຽງ "ບໍ່ເຫັນດີ" ຕໍ່ວາລະໃດໜຶ່ງທີ່ຖືກສົ່ງໃຫ້ທີ່ປະຊຸມຫຼັງຈາກທີ່ກອງປະຊຸມໄດ້ ປະກາດຜົນການລົງຄະແນນຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.

Any and All "Disapprove votes" in any Agenda which are submitted to the Meeting after the Meeting has already announced the voting result of such Agenda shall be null and void.

8. ການແຈ້ງຜົນການລົງຄະແນນສຽງ/**Notification of voting result**

ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍ ໂດຍ ການນັບ ຄະແນນສຽງ ຈະຖືເອົາໜຶ່ງຮຸ້ນ ເທົ່າກັບໜຶ່ງຄະແນນສຽງ.

Attendees will be informed about the voting result forthwith in the meeting with one share equals one vote.

9. ການສະເໜີຄຳຖາມ/**Questions**

9.1 ປະທານກອງປະຊຸມ ຈະສະເໜີໃຫ້ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງຖືກຕ້ອງ ມີຄຳ ຖາມ ຫຼື ສະແດງຄຳເຫັນທີ່ບໍ່ນອນໃນວາລະຂອງກອງປະຊຸມ, ໃນຕອນທ້າຍກອງປະຊຸມພາຍຫຼັງທີ່ ສຳເລັດຄົບຖ້ວນທຸກວາລະແລ້ວ. ສຳລັບຜູ້ເຂົ້າຮ່ວມອື່ນໆ ຈະບໍ່ມີສິດສະເໜີຄຳຖາມ ຫຼື ມີຄຳເຫັນໃນທີ່ ປະຊຸມ, ຍົກເວັ້ນກໍລະນີທີ່ປະທານ ກອງປະຊຸມ ໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມ ດັ່ງກ່າວ ປະກອບຄຳເຫັນຕໍ່ທີ່ ປະຊຸມ.

The chairman of the meeting will ask the shareholders or proxies to question or make comments on the issues which are not included in the agenda of the meeting, after the meeting has completed its all agenda. Other attendees are not eligible to question or make any comments, unless the Chairman asks such attendees to question or make comments in the meeting.

9.2 ເມື່ອມີການສະເໜີຈາກປະທານກອງປະຊຸມແລ້ວນັ້ນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ປະສົງຈະມີ ຄຳຖາມ ຫຼື ສະແດງຄຳເຫັນຕໍ່ທີ່ປະຊຸມ ຕ້ອງຍົກມືຂຶ້ນ ພ້ອມທັງສະແດງເຄື່ອງໝາຍຕາມທີ່ ທຄຕລ ກຳນົດໃຫ້ ເພື່ອສະແດງວ່າແມ່ນຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງແທ້ຈິງ. ຖ້າຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ ໄດ້ຮັບມອບໝາຍ ຫາກບໍ່ສະແດງເຄື່ອງໝາຍດັ່ງກ່າວແລ້ວນັ້ນ ປະທານກອງປະຊຸມ ຫຼື ຄະນະອຳນວຍ ການ ທຄຕລ ຫຼື ຄະນະຮັບຜິດຊອບກອງປະຊຸມ ມີສິດສະເໜີຄັດຄ້ານຄຳຖາມ ຫຼື ຄຳເຫັນຂອງຜູ້ກ່ຽວ ແລະ ກອງປະຊຸມ ຈະບໍ່ມີພັນທະໃນການຕອບຄຳຖາມຂອງຜູ້ກ່ຽວໃນກໍລະນີ ດັ່ງກ່າວ.

Having been asked by the Chairman, any shareholders or proxies desirous to question or make comments in the meeting must raise their hands and show the symbol as given by BCEL to confirm that they are truly the shareholders or proxies. Should the shareholders or proxies do not show such symbol, the Chairman or BCEL Directors, or Committee in charge of the meeting may reject questions or comments made by the shareholders or proxies, and in this case the meeting shall not be obliged to answer such questions.

ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ
Instruction about the documents and evidence to be presented prior to attending the meeting

ເພື່ອຄວາມສະດວກໃນການລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະເຂົ້າຮ່ວມກອງປະຊຸມ ກະລຸນານຳເອົາໜັງສືເຊີນປະຊຸມ, ໃບເຂົ້າຮ່ວມ ກອງປະຊຸມທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ ແລະ ໃບມອບສິດ (ສຳລັບຜູ້ຕາງໜ້າ) ມາພ້ອມເອກະສານທີ່ສາມາດນຳໃຊ້ ຢັ້ງຢືນຕົນເອງ ຕາມແຕ່ລະກໍລະນີດັ່ງນີ້:

For convenience in registration process to attend the Meeting, the shareholders or the proxies who will attend the Meeting are required to bring the Invitation to the Meeting, the Letter for attending the meeting issued by the Lao Securities Exchange and the Proxy (applicable for the proxy only) together with the documents for proof of identity as indicated for each circumstance below:

1. ຜູ້ເຂົ້າຮ່ວມທີ່ເປັນບຸກຄົນ / attendees who are natural persons

ໃຫ້ນຳເອົາເອກະສານໃດໜຶ່ງຂອງຕົນດັ່ງຕໍ່ໄປນີ້ ມາສະແດງເວລາລົງທະບຽນ

Shall present one of the following documents of their own at the time of registration.

1.1. ບັດປະຈຳຕົວ/Identification Card

1.2. ສຳມະໂນຄົວ/Family book

1.3. ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ)/Passport (for foreign investors)

2. ຜູ້ເຂົ້າຮ່ວມທີ່ເປັນນິຕິບຸກຄົນ / Attendees who are legal persons

ໃຫ້ນຳເອົາເອກະສານໃດໜຶ່ງທີ່ກຳນົດໄວ້ໃນຂໍ້ 1 ເທິງນີ້ ພ້ອມກັບເອກະສານໃດໜຶ່ງດັ່ງຕໍ່ໄປນີ້ ມາສະແດງ ເວລາລົງທະບຽນ:

Shall present one of the documents as given in 1. above plus one of the following documents at the time of registration:

2.1. ໃບອະນຸຍາດລົງທຶນ/ Investment License

2.2. ໃບທະບຽນວິສາຫະກິດ/ Certificate of Enterprise Registration (Affidavit)

2.3. ໃບທະບຽນອາກອນສະບັບຫຼ້າສຸດ/ most recent Tax Certificate

ສຳລັບຜູ້ເຂົ້າຮ່ວມທີ່ບໍ່ແມ່ນຜູ້ອຳນວຍການ ຕ້ອງໄດ້ນຳເອົາໃບມອບສິດຈາກຜູ້ອຳນວຍການທີ່ມີສິດອຳນາດມາພ້ອມຕື່ມອີກ.

For attendee who is not the authorized director shall have the Proxy as attached hereto signed by the authorized director.

ເອກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕ ເພື່ອເຂົ້າຮ່ວມກອງປະຊຸມຊຶ່ງເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ ໂດຍມີການເຊັນຢັ້ງຢືນຄວາມຖືກຕ້ອງໃນການແປຈາກບໍລິສັດແປພາສາທີ່ໜ້າເຊື່ອຖືໄດ້. ສຳລັບພາສາຕ່າງ ປະເທດ ແມ່ນອະນຸຍາດໃຫ້ສຳລັບພາສາອັງກິດເທົ່ານັ້ນ. ທຄຕລ ມີສິດປະຕິເສດເອກະສານອ້າງອີງໃດໆ ທີ່ບໍ່ເປັນໄປຕາມ ການກຳນົດນີ້.

All documents and evidence in a foreign language which are required to present prior to attending the Meeting must be translated into Lao language and the translation shall be certified by an acceptable translation company. The foreign language is permitted only for English. BCEL has the right to reject any documents contradicting this provision.

ຄຳແນະນຳ ກ່ຽວກັບ ການລົງຄະແນນສຽງ
Vote Instruction

1. ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບບັດລົງຄະແນນສຽງສຳລັບທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງ ໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍສິດໄດ້ລະບຸຢ່າງຈະແຈ້ງແລ້ວ ກ່ຽວກັບ ການລົງຄະແນນໃນແຕ່ລະວາລະ ທະນາຄານ ຈະບັນທຶກການລົງຄະແນນສຽງ ໃນເວລາລົງທະບຽນ ໂດຍທີ່ຜູ້ຕາງໜ້າຈະບໍ່ຕ້ອງລົງແນນສຽງອີກ.
   The attendees will be given a ballot for voting in each agenda requiring a vote at the time of registration. For the case of proxy in which the voting in each agenda has been clearly specified by the shareholder in the Proxy, BCEL will record such votes at the time of the registration and the proxy will not be required to vote.
2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ ບໍ່ເຫັນດີ ຕໍ່ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນ ສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ ເຫັນດີຕໍ່ການແຕ່ງຕັ້ງດັ່ງກ່າວ ກໍບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).
   Only the shareholders who DO NOT AGREE with the matters proposed by the meeting are invited to vote (meaning that for those who agree with such appointment are not necessary to make any vote)
3. ໃນການລົງຄະແນນສຽງ ຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້. ໃນນັ້ນ ຕ້ອງໄດ້ລະບຸ ຢ່າງຈະແຈ້ງກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈຳນວນຮຸ້ນ ທຄຕລ ທີ່ທ່ານຖືຢູ່ (ຖ້າບໍ່ມີຂໍ້ມູນດັ່ງກ່າວຢູ່ໃນບັດລົງຄະແນນສຽງ) ແລະ ໃຫ້ໝາຍຕີນກາໃສ່ຫ້ອງ ບໍ່ເຫັນດີ.
   To vote, kindly fill in the distributed ballot in which you must specify clearly about your name and surname, and the total number of BCEL shares you are holding (if such information is not available in the ballot) and mark a cross in the Disapprove box.
4. ຫລັງຈາກທ່ານລົງຄະແນນສຽງຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະ ຮວບຮວມຄະແນນສຽງ.
   After you have clearly casted your vote, kindly raise your hand with the ballot, so the organizers can take the ballot and count the votes.
5. ທ່ານຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍ ໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນ ເທົ່າກັບໜຶ່ງຄະແນນສຽງ.
   You will be informed about the voting result right in the meeting with one share equals one vote.
6. ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນຮຸ້ນ ທຄຕລ ທັງໝົດ ໃນທີ່ປະຊຸມ.
   The Disapproval votes will become effective only if such votes account for more than half of the total number of BCEL shares attending the meeting.

ໝາຍເຫດ/Remark:

1. ຜູ້ເຂົ້າຮ່ວມທີ່ບໍ່ໄດ້ລົງທະບຽນເຂົ້າປະຊຸມ ຈະບໍ່ມີສິດໃນການລົງຄະແນນສຽງ.
   Any attendees who failed to make registration will not be eligible to votes.
2. ທຸກບັດລົງຄະແນນສຽງບໍ່ເຫັນດີຕໍ່ວາລະໃດໜຶ່ງ ທີ່ຖືກສົ່ງໃຫ້ທີ່ປະຊຸມ ຫຼັງຈາກທີ່ກອງປະຊຸມໄດ້ປະກາດຜົນການລົງຄະແນນຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.
   All disapprove votes in any Agenda which is submitted to the Meeting after the Meeting has announced the voting result of such Agenda shall be deemed invalid.

ແຜນທີ່ສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນຂອງ ທຄຕລ / BCEL Shareholder Meeting

ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2021
ໃນວັນທີ 29/04/2022
BCEL's shareholders' Meeting for 2021,
which shall be held on 29/04/2022

